**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ** ເລກທີ /ກວຕ
ນະຄອນຫຼວງວຽງຈັນ, ວັນທີ

# ຂໍ້ຕົກລົງ
# ຂອງ ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ
# ວ່າດ້ວຍການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ຊັບສິນທາງປັນຍາ
# ກ່ຽວກັບ ເຄື່ອງໝາຍການຄ້າ ແລະ ຊື່ການຄ້າ

- ອີງຕາມກົດໝາຍວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ສະບັບເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງການເຄື່ອນໄຫວຂອງກະຊວງວິທະຍາສາດ ແລະເຕັກໂນໂລຊີ, ສະບັບເລກທີ 314/ນຍ, ລົງວັນທີ 29 ກັນຍາ 2017;
- ອີງຕາມ ການຄົ້ນຄວ້າສະເໜີຂອງ ກົມຊັບສິນທາງປັນຍາ, ສະບັບເລກທີ..... /ກວຕ.ກຊປ, ລົງວັນທີ ........

## ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດລະບຽບການ ກ່ຽວກັບ ປະເພດຂອງເຄື່ອງໝາຍ, ຂັ້ນຕອນການຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ, ການກວດສອບເບື້ອງຕົ້ນ, ການແຍກຄຳຮ້ອງ, ການເຜີຍແຜ່ຄຳຮ້ອງ, ການຄັດຄ້ານຄຳຮ້ອງ, ການກວດສອບເນື້ອໃນ, ການຈົດທະບຽນ, ການຕໍ່ອາຍຸການປົກປ້ອງ, ການ

ດຳເນີນການຕ່າງໆ ທັງການຈົດທະບຽນ, ການໂອນສິດ, ການອະນຸຍາດນຳໃຊ້, ການເປັນຜູ້ຕາງໜ້າ, ການທົບທວນຄືນທາງດ້ານບໍລິຫານ ແລະ ອື່ງການຄຸ້ມຄອງ ວຽກງານ ເຄື່ອງໝາຍການຄ້າ ແລະ ຊື່ການຄ້າ ເພື່ອແນໃສ່ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ກ່ຽວກັບ ເຄື່ອງໝາຍການຄ້າ ແລະ ຊື່ການຄ້າ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 2. ເຄື່ອງໝາຍການຄ້າ ແລະ ຊື່ການຄ້າ**

ເຄື່ອງໝາຍການຄ້າ ແມ່ນ ເຄື່ອງໝາຍ ທີ່ກ່ຽວຂ້ອງກັບ ສິນຄ້າ ຫຼື ການບໍລິການ ເພື່ອສະແດງວ່າສິນຄ້າ ຫຼື ການບໍລິການ ຂອງຕົນທີ່ນຳໃຊ້ເຄື່ອງໝາຍການຄ້ານັ້ນ ແຕກຕ່າງຈາກ ສິນຄ້າ ຫຼື ການບໍລິການ ຂອງບຸກຄົນອື່ນ.

ຊື່ການຄ້າ ແມ່ນ ຊື່ ຂອງວິສາຫະກິດ ທີ່ໃຊ້ເຂົ້າໃນການເຄື່ອນໄຫວທຸລະກິດ. ຊື່ການຄ້າ ຈະເປັນ ຫຼື ບໍ່ເປັນສ່ວນໜຶ່ງຂອງເຄື່ອງໝາຍການຄ້າ ກໍຈະໄດ້ຮັບການປົກປ້ອງ ເຖິງວ່າບໍ່ໄດ້ຈົດທະບຽນກໍຕາມ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ສານປະຊາຊົນ** ໝາຍເຖິງ ສານ ທີ່ມີສິດອຳນາດພິຈາລະນາ ຕັດສິນຄະດີ ກ່ຽວກັບ ຊັບສິນທາງປັນຍາ;
2. **ຜູ້ຮ້ອງຂໍ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຍື່ນຄຳຮ້ອງຂໍ ຈົດທະບຽນເຄື່ອງໝາຍການຄ້າ, ດັດແກ້ ຫຼື ຂໍຍົກເລີກ ບາງສ່ວນ ຫຼື ທັງໝົດ ຂອງການຈົດທະບຽນເຄື່ອງໝາຍການຄ້າ ຫຼື ຜູ້ສືບທອດຜົນປະໂຫຍດຂອງບຸກຄົນດັ່ງກ່າວ;
3. **ຄຳຮ້ອງ** ໝາຍເຖິງ ສຳນວນເອກະສານການຍື່ນຄຳຮ້ອງຂໍ ຈົດທະບຽນເຄື່ອງໝາຍການຄ້າ, ດັດແກ້, ຍົກເລີກ ບາງສ່ວນ ຫຼື ທັງໝົດ ຂອງການຈົດທະບຽນເຄື່ອງໝາຍການຄ້າ;
4. **ຜູ້ຄັດຄ້ານ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສະເໜີຂໍຄັດຄ້ານຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ;
5. **ການຄັດຄ້ານ** ໝາຍເຖິງ ບຸກຄົນທີສາມ ທີ່ໄດ້ລະບຸໄວ້ຂໍ້ 4 ເທິງນີ້ ທີ່ໄດ້ຍື່ນຄຳສະເໜີຂໍຄັດຄ້ານ ຕໍ່ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ທີ່ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນອຸດສາຫະກຳ;
6. **ການຍົກເລີກ** ໝາຍເຖິງ ການຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນເຄື່ອງໝາຍການຄ້າ ບາງສ່ວນ ຫຼື ທັງໝົດ ໂດຍເຈົ້າຂອງເອງ ຫຼື ບຸກຄົນທີສາມ ທີ່ຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນເຄື່ອງໝາຍການຄ້າ ບາງສ່ວນ ຫຼື ທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 44 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ;
7. **ໝວດ** ໝາຍເຖິງ ການຈັດໝວດຂອງສາກົນກ່ຽວກັບ ສິນຄ້າ ແລະ ການບໍລິການ ຕາມສົນທິສັນຍາ ນິສ (Nice Agreement) ສຳລັບການຈົດທະບຽນເຄື່ອງໝາຍການຄ້າ;
8. **ການໂອນສິດ** ໝາຍເຖິງ ການໂອນສິດ ບາງສ່ວນ ຫຼື ທັງໝົດ ຂອງເຈົ້າຂອງເຄື່ອງໝາຍການຄ້າໃຫ້ແກ່ຜູ້ຮັບສິດ;

9. **ໃບໂອນສິດ** ໝາຍເຖິງ ເອກະສານທີ່ເປັນລາຍລັກອັກສອນປະເພດໜຶ່ງ ທີ່ໄດ້ກຳນົດ ກ່ຽວກັບການໂອນສິດ;

10. **ການແຍກຄຳຮ້ອງ** ໝາຍເຖິງ ຜູ້ຮ້ອງຂໍໄດ້ແຍກຄຳຮ້ອງດຽວ ອອກເປັນ ສອງ ຫຼື ຫຼາຍສະບັບ ຊຶ່ງແຕ່ລະຄຳຮ້ອງທີ່ໄດ້ແຍກມານັ້ນ ຕ້ອງກ່ຽວຂ້ອງກັບເຄື່ອງໝາຍທີ່ຢູ່ໃນຄຳຮ້ອງຕົ້ນສະບັບ;

11. **ຜູ້ຖືສິດ ຫຼື ເຈົ້າຂອງສິດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສິດຕາມກົດໝາຍຕໍ່ກັບ ເຄື່ອງໝາຍການຄ້າ ຫຼື ຊື່ການຄ້າ ຫຼື ຜູ້ໄດ້ຮັບມອບສິດ ຫຼື ຜູ້ສືບທອດຜົນປະໂຫຍດ ຈາກບຸກຄົນດັ່ງກ່າວ;

12. **ການອະນຸຍາດນຳໃຊ້** ໝາຍເຖິງ ການຕົກລົງຂອງເຈົ້າຂອງສິດ ໃຫ້ຜູ້ອື່ນນຳໃຊ້ສິດ ຕໍ່ກັບເຄື່ອງໝາຍການຄ້າ ຫຼື ຊື່ການຄ້າ ຂອງຕົນ ເພື່ອນຳໃຊ້ສະເພາະແຕ່ພຽງຜູ້ດຽວ ລວມທັງການຕົກລົງບໍ່ໃຫ້ດຳເນີນການທາງດ້ານກົດໝາຍຕໍ່ຜູ້ໄດ້ຮັບອະນຸຍາດນຳໃຊ້ສິດດັ່ງກ່າວ ຖ້າປະຕິບັດຕາມເງື່ອນໄຂຂອງການຕົກລົງ;

13. **ຜູ້ໄດ້ຮັບອະນຸຍາດນຳໃຊ້** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບສິດນຳໃຊ້ຈາກເຈົ້າຂອງສິດຕໍ່ກັບເຄື່ອງໝາຍການຄ້າ ຫຼື ຊື່ການຄ້າ;

14. **ຜູ້ອະນຸຍາດນຳໃຊ້** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ອອກໃບອະນຸຍາດນຳໃຊ້ສິດ ຕໍ່ກັບ ເຄື່ອງໝາຍການຄ້າ ຫຼື ຊື່ການຄ້າ

15. **ສົນທິສັນຍາປາຣີ** ໝາຍເຖິງ ສົນທິສັນຍາສາກົນວ່າດ້ວຍການປົກປ້ອງຊັບສິນອຸດສາຫະກຳ;

16. **ກຳລັງດຳເນີນການ** ໝາຍເຖິງ ໄລຍະການດຳເນີນການພິຈາລະນາຄຳຮ້ອງໃດໜຶ່ງ ຊຶ່ງເລີ່ມແຕ່ການຍື່ນຄຳຮ້ອງຈົນເຖິງ ການຈົດທະບຽນ, ການສະຫຼະສິດ ຫຼື ການດຳເນີນການຂັ້ນສຸດທ້າຍອື່ນໆ;

17. **ໃບມອບສິດ** ໝາຍເຖິງ ເອກະສານທີ່ເປັນລາຍລັກອັກສອນ ຊຶ່ງເຈົ້າຂອງສິດໄດ້ມອບສິດຂອງຕົນໃຫ້ ບຸກຄົນໜຶ່ງ ຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນຕົນ;

18. **ຜູ້ມອບສິດ** ໝາຍເຖິງ ຜູ້ທີ່ມອບສິດຂອງຕົນ ໃຫ້ ບຸກຄົນໜຶ່ງ ຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນຕົນ ໃນການຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຫຼື ດຳເນີນການອື່ນໆ ນຳກົມຊັບສິນທາງປັນຍາ;

19. **ຜູ້ຕາງໜ້າ** ໝາຍເຖິງ ທະນາຍຄວາມ ຫຼື ຕົວແທນ ທີ່ໄດ້ຮັບອະນຸຍາດຈາກເຈົ້າຂອງເຄື່ອງໝາຍການຄ້າ ຫຼື ຊື່ການຄ້າ ໃນການຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຫຼື ດຳເນີນການອື່ນໆ ນຳກົມຊັບສິນທາງປັນຍາ;

20. **ການລົບລ້າງ** ໝາຍເຖິງ ການຍົກເລີກໃບມອບສິດ ໂດຍເຈົ້າຂອງສິດ ທີ່ໄດ້ມອບໃນໄລຍະຜ່ານມາໃຫ້ ຜູ້ປະກອບການ ຫຼື ບຸກຄົນອື່ນ ໃນການປະຕິບັດໜ້າທີ່ແທນຕົນ.

**ມາດຕາ 4. ການປົກປ້ອງເຄື່ອງໝາຍການຄ້າ**

ການປົກປ້ອງເຄື່ອງໝາຍການຄ້າໃດໜຶ່ງ ຕ້ອງໃຫ້ສອດຄ່ອງ ຕາມກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂັ້ນຕອນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 5. ບຸກຄົນທີ່ມີສິດໄດ້ຮັບການປົກປ້ອງ**

ບຸກຄົນຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 26 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ມີສິດໄດ້ຮັບການປົກປ້ອງ ເຄື່ອງໝາຍການຄ້າ ຫຼື ຊື່ການຄ້າ, ຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ, ຮັບໃບຢັ້ງຢືນການຈົດທະບຽນ ແລະ ຕໍ່ອາຍຸໃບຢັ້ງຢືນການຈົດທະບຽນ, ນຳໃຊ້ສິດຂອງຕົນໃນການດຳເນີນການແກ້ໄຂທາງດ້ານບໍລິຫານ ຫຼື ຮ້ອງຟ້ອງຕໍ່ສານ ແລະ ດຳເນີນການອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ຫຼື ຂໍ້ຕົກລົງສະບັບນີ້.

**ມາດຕາ 6. ພາສາທີ່ໃຊ້ສຳລັບການປະກອບສຳນວນຄຳຮ້ອງ**

ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ລວມທັງແບບພິມຄຳຮ້ອງ ແລະ ເອກະສານຄັດຕິດອື່ນໆ ສາມາດຍື່ນເປັນພາສາລາວ ຫຼື ພາສາອັງກິດກໍໄດ້.

ໃນກໍລະນີ ຄຳຮ້ອງ ແລະ ເອກະສານ ທີ່ຍື່ນເປັນພາສາອັງກິດຕ້ອງແປເປັນພາສາລາວໂດຍສອດຄ່ອງຕາມ ມາດຕາ 37 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ, ຖ້າຫາກບໍ່ປະຕິບັດຕາມເງື່ອນໄຂດັ່ງກ່າວ ຄຳຮ້ອງນັ້ນຈະບໍ່ຖືກພິຈາລະນາ ແລະ ຖືວ່າສະຫຼະສິດ.

ຜູ້ຮ້ອງຂໍບໍ່ຈຳເປັນຕ້ອງແປເນື້ອໃນບາງສ່ວນຂອງຄຳຮ້ອງເຊັ່ນ: ຊື່ ແລະ ທີ່ຢູ່ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ; ຊື່ການຄ້າ, ເຄື່ອງໝາຍການຄ້າ ແລະ ຄຳສັບທາງດ້ານວິຊາການ.

ໃນກໍລະນີ ເຄື່ອງໝາຍການຄ້າໃດໜຶ່ງຫາກບໍ່ເປັນຕົວອັກສອນລາແຕັງ ຕ້ອງໄດ້ແປເປັນພາສາລາວ ຫຼື ຕີຄວາມໝາຍ ແລະ ການອ່ານອອກສຽງຂອງເຄື່ອງໝາຍນັ້ນ.

**ມາດຕາ 7. ການຄົ້ນຫາເຄື່ອງໝາຍການຄ້າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດຍື່ນຄຳຮ້ອງຂໍຄົ້ນຫາເຄື່ອງໝາຍການຄ້າ ຢູ່ໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ ເພື່ອຈຸດປະສົງຢາກຮູ້ວ່າ ເຄື່ອງໝາຍການຄ້າ ທີ່ຂໍຄົ້ນຫານັ້ນໄດ້ຈົດທະບຽນແລ້ວຫຼືບໍ່ ໂດຍຕ້ອງລະບຸໝວດຂອງ ສິນຄ້າ ຫຼື ການບໍລິການ ທີ່ຕ້ອງການຄົ້ນຫາ ພ້ອມທັງຈ່າຍຄ່າບໍລິການ.

ໃນກໍລະນີ ເຄື່ອງໝາຍການຄ້າ ທີ່ຂໍຄົ້ນຫານັ້ນຫາກເປັນພາສາຕ່າງປະເທດ ທີ່ບໍ່ແມ່ນຕົວອັກສອນລາແຕັງຕ້ອງມີ ຄຳອະທິບາຍ ແລະ ວິທີອ່ານອອກສຽງ ເປັນ ພາສາລາວ ຫຼື ພາສາອັງກິດ ມາພ້ອມ.

ຜົນຂອງການຄົ້ນຫາເຄື່ອງໝາຍການຄ້າ ເປັນພຽງແຕ່ການກວດຄົ້ນຫາຂໍ້ມູນກ່ຽວກັບເຄື່ອງໝາຍການຄ້າ ຢູ່ໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ ເບື້ອງຕົ້ນເທົ່ານັ້ນ. ກົມຊັບສິນທາງປັນຍາ ຈະບໍ່ໃຫ້ຄຳປຶກສາທາງດ້ານກົດໝາຍ ແລະ ບໍ່ໃຫ້ຄຳແນະນຳໃດໆ ກ່ຽວກັບຄວາມເປັນໄປໄດ້ວ່າ ເຄື່ອງໝາຍການຄ້ານັ້ນສອດຄ່ອງຕາມເງື່ອນໄຂຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

**ມາດຕາ 8. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງ ພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບວຽກງານເຄື່ອງໝາຍການຄ້າ ແລະ ຊື່ການຄ້າ ຢູ່ ສປປ ລາວ.

# ໝວດທີ 2
# ປະເພດຂອງເຄື່ອງໝາຍ
# ແລະ ຂັ້ນຕອນການຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ

**ມາດຕາ 9. ປະເພດຂອງເຄື່ອງໝາຍ**

ປະເພດຂອງເຄື່ອງໝາຍ ມີດັ່ງນີ້:

1. ເຄື່ອງໝາຍການຄ້າ ແມ່ນສັນຍາລັກໃດໜຶ່ງ ຫຼື ຫຼາຍສັນຍາລັກລວມກັນ ທີ່ສາມາດຈຳແນກສິນຄ້າ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ແຕກຕ່າງຈາກສັນຍາລັກຂອງ ຜູ້ອື່ນ. ສັນຍາລັກ ອາດເປັນ ຄຳສັບ ລວມທັງຄຳສັບທີ່ເປັນລວດລາຍ, ລາຍເຊັນ, ຊື່ບຸກຄົນ, ແບບຕົວເລກ, ອົງປະກອບເປັນຮູບຮ່າງ, ຮູບຊົງ, ຮູບແຕ້ມ, ຮູບຖ່າຍ, ຮູບພາບ, ຮູບສາມມິຕິ, ຮູບທີ່ມີການເຄື່ອນເໜັງ ຫຼື ສິ່ງຫຸ້ມຫໍ່ ຂອງສິນຄ້າ ແລະ ການລວມກັນ ຫຼື ປະສົມປະສານ ຂອງຫຼາຍສີ ເຊັ່ນດຽວກັບການລວມກັນ ຂອງສັນຍາລັກໃດໜຶ່ງນັ້ນ.

2. ເຄື່ອງໝາຍບໍລິການ ແມ່ນສັນຍາລັກໃດໜຶ່ງ ຫຼື ຫຼາຍສັນຍາລັກລວມກັນ ທີ່ສາມາດຈຳແນກການບໍລິການ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ແຕກຕ່າງຈາກສັນຍາລັກ ຂອງ ຜູ້ອື່ນ ຊຶ່ງແມ່ນສັນຍາລັກເຊັ່ນດຽວກັນຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1 ຂອງມາດຕານີ້.

3. ເຄື່ອງໝາຍຮັບຮອງ ແມ່ນເຄື່ອງໝາຍທີ່ ນິຕິບຸກຄົນ ຫຼື ການຈັດຕັ້ງສ້າງຂຶ້ນ ເພື່ອນຳໃຊ້ໃນການຮັບຮອງ ມາດຕະຖານ ຫຼື ມີຄຸນລັກສະນະສະເພາະທີ່ເປັນເງື່ອນໄຂ ໃນການຮັບຮອງສິນຄ້າ ຫຼື ການບໍລິການ. ເຄື່ອງໝາຍດັ່ງກ່າວ ຈະຖືກ ນຳໃຊ້ໂດຍບຸກຄົນທີ່ສາມ ເພື່ອຊີ້ບອກ ເຖິງທີ່ມາ, ວັດຖຸດິບ ແລະ ວິທີການຜະລິດສິນຄ້າ ຫຼື ວິທີການໃຫ້ການບໍລິການ ວ່າໄດ້ມາດຕະຖານດ້ານ ຄຸນນະພາບ, ຄວາມປອດໄພ ຫຼື ຄວາມສະອາດ ຫຼື ຖືກຜະລິດ ໂດຍບຸກຄົນທີ່ມີຄວາມຊ່ຽວຊານສະເພາະດ້ານໃດໜຶ່ງ.

4. ເຄື່ອງໝາຍລວມໝູ່ ແມ່ນເຄື່ອງໝາຍທີ່ຖືກຮັບຮອງໂດຍອົງການຈັດຕັ້ງລວມໝູ່ ເຊັ່ນ: ສະມາຄົມ, ສະຫະພັນ ຫຼື ອົງການຈັດຕັ້ງທາງສັງຄົມອື່ນໆ, ສະຫະກອນ, ສະພາການຄ້າ ແລະ ອຸດສາຫະກຳ ຫຼື ອົງການຈັດຕັ້ງລວມໝູ່ອື່ນໆ. ເຄື່ອງໝາຍລວມໝູ່ ແມ່ນເຄື່ອງໝາຍການຄ້າ ຊຶ່ງມີພຽງແຕ່ສະມາຊິກຂອງອົງການຈັດຕັ້ງລວມໝູ່ເປັນຜູ້ນຳໃຊ້ ເພື່ອຊີ້ບອກ ສິນຄ້າ ຫຼື ການບໍລິການຂອງຕົນ ທີ່ແຕກຕ່າງຈາກ ສິນຄ້າ ຫຼື ການບໍລິການ ຂອງພາກສ່ວນອື່ນ.

**ມາດຕາ 10. ເຄື່ອງໝາຍທີ່ສາມາດໄດ້ຮັບໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ**

ປະເພດເຄື່ອງໝາຍ ທີ່ສາມາດໄດ້ຮັບໃບຢັ້ງຢືນເຄື່ອງໝາຍການຄ້າ ຕ້ອງມີເງື່ອນໄຂຄົບຖ້ວນດັ່ງທີ່ໄດ້ກຳນົດໄວ້ໃນ ມາດຕາ 16 ແລະ ບໍ່ຂັດກັບ ມາດຕາ 23 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 11. ຂັ້ນຕອນການຍື່ນຄໍາຮ້ອງ**

ບຸກຄົນທີ່ມີສິດໄດ້ຮັບການປົກປ້ອງຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ແລະ ມີຈຸດປະສົງ ຂໍຈົດທະບຽນເຄື່ອງໝາຍການຄ້າ ສາມາດຍື່ນຄໍາຮ້ອງ ຢູ່ນໍາກົມຊັບສິນທາງປັນຍາ ຫຼື ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ຕາມແບບພິມຂອງກົມຊັບສິນທາງປັນຍາ ແລະ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າໃດໜຶ່ງທີ່ຍື່ນຢູ່ນໍາກົມຊັບສິນທາງປັນຍາ ຫຼື ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ຢ່າງໜ້ອຍຕ້ອງປະຕິບັດໃຫ້ໄດ້ຕາມເງື່ອນໄຂຕໍ່າສຸດ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 33 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 13 ຂອງຂໍ້ຕົກລົງສະບັບນີ້;
2. ກົມຊັບສິນທາງປັນຍາ ຕ້ອງຮັບເອົາຄໍາຮ້ອງ, ອອກໃບຮັບຄໍາຮ້ອງຊຶ່ງລະບຸ ເລກທີ ແລະ ວັນທີຍື່ນຄໍາຮ້ອງໃນເມື່ອເຫັນວ່າຄໍາຮ້ອງຫາກສອດຄ່ອງຕາມເງື່ອນໄຂຕໍ່າສຸດ;
3. ໃນກໍລະນີ ທີ່ຄໍາຮ້ອງຫາກຍື່ນ ຜ່ານພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ພະແນກຕ້ອງຮັບເອົາຄໍາຮ້ອງ ແລະ ອອກໃບຮັບຄໍາຮ້ອງຂອງຕົນ ຊຶ່ງລະບຸ ເວລາ ແລະ ວັນທີ ຮັບຄໍາຮ້ອງ ເມື່ອເຫັນວ່າຄໍາຮ້ອງຫາກສອດຄ່ອງຕາມເງື່ອນໄຂຕໍ່າສຸດ ແລ້ວສົ່ງຕໍ່ໃຫ້ກົມເພື່ອດໍາເນີນການຕາມຂັ້ນຕໍ່ໄປ, ຫຼັງຈາກນັ້ນ ກົມຕ້ອງອອກໃບຮັບຄໍາຮ້ອງເຊັ່ນດຽວກັນກັບຄໍາຮ້ອງທີ່ຍື່ນຢູ່ນໍາກົມ;
4. ໃນກໍລະນີ ຜູ້ຮ້ອງຂໍຫາກບໍ່ສາມາດປະຕິບັດໄດ້ຕາມເງື່ອນໄຂດັ່ງກ່າວ ກົມຊັບສິນທາງປັນຍາ ຫຼື ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ຈະບໍ່ຮັບເອົາຄໍາຮ້ອງດັ່ງກ່າວ;
5. ໃນກໍລະນີ ຜູ້ຮ້ອງຂໍຫາກມີຈຸດປະສົງ ຢາກຖອນຄໍາຮ້ອງ ຫຼື ຄໍາຮ້ອງຖືກສະຫຼະສິດ ຫຼື ຖືກປະຕິເສດ ຈະບໍ່ມີການສົ່ງຄືນຄ່າທໍານຽມ ແລະ ຄ່າບໍລິການ ທີ່ໄດ້ຈ່າຍໄປແລ້ວ.
6. ໃນກໍລະນີ ຜູ້ຮ້ອງຂໍຫາກຮຽກເອົາວັນບູລິມະສິດ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 29 ຂອງກົດໝາຍວ່າດ້ວຍ ຊັບສິນທາງປັນຍາ ຊຶ່ງມີໄລຍະເວລາຂໍຮັບວັນບູລິມະສິດ ສໍາລັບເຄື່ອງໝາຍການຄ້າແມ່ນ 6 ເດືອນ ນັບແຕ່ວັນທີໄດ້ຮັບວັນບູລິມະສິດເປັນຕົ້ນໄປ, ຖ້າວ່າມື້ສຸດທ້າຍຂອງໄລຍະເວລາດັ່ງກ່າວຫາກແມ່ນວັນພັກທາງລັດຖະການ ຫຼື ເປັນວັນທີ່ກົມບໍ່ ເປີດຮັບຄໍາຮ້ອງ, ກົມຕ້ອງຕໍ່ໄລຍະເວລາດັ່ງກ່າວອອກໄປຈົນເຖິງ ວັນທໍາອິດຂອງວັນລັດຖະການ ຖັດໄປ.

**ມາດຕາ 12. ສໍານວນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂໍການປົກປ້ອງເຄື່ອງໝາຍການຄ້າ ຕ້ອງປະກອບສໍານວນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ດັ່ງນີ້:

1. ຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າຕາມແບບພິມຂອງກົມຊັບສິນທາງປັນຍາ;
2. ໃບມອບສິດ ທີ່ເປັນຕົ້ນສະບັບ ໃນກໍລະນີ ຫາກຍື່ນຄໍາຮ້ອງຜ່ານຜູ້ຕາງໜ້າ;
3. ຮູບແຕ້ມ ຫຼື ຮູບຖ່າຍ ຫຼື ຮູບພາບ ຫຼື ຕົວຢ່າງເຄື່ອງໝາຍ ທີ່ຈະແຈ້ງ;
4. ບົດອະທິບາຍກ່ຽວກັບສິນຄ້າ ຫຼື ການບໍລິການ ລວມທັງ ລາຍການສິນຄ້າ ຫຼື ການບໍລິການ ທີ່ຈະນໍາໃຊ້ເຄື່ອງໝາຍດັ່ງກ່າວ. ໃນກໍລະນີ ຄໍາຮ້ອງຫາກເປັນ ເຄື່ອງໝາຍລວມໝູ່ ຫຼື ເຄື່ອງໝາຍ

ຮັບຮອງ ຄຳຮ້ອງຕ້ອງລະບຸເຄື່ອງໝາຍດັ່ງກ່າວ ແລະ ຕ້ອງມີບົດອະທິບາຍກ່ຽວກັບການນຳໃຊ້ເຄື່ອງໝາຍນັ້ນ;

5. ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

**ມາດຕາ 13. ເງື່ອນໄຂຕໍ່າສຸດໃນການໄດ້ຮັບວັນທີຍື່ນຄຳຮ້ອງ**

ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ທີ່ມີເງື່ອນໄຂຕໍ່າສຸດໃນການໄດ້ຮັບວັນທີຍື່ນຄຳຮ້ອງ ຕ້ອງປະກອບດ້ວຍ ຊື່, ທີ່ຢູ່, ສັນຊາດຂອງຜູ້ຮ້ອງຂໍ ແລະ ຮູບແຕ້ມ ຫຼື ຮູບຖ່າຍ ຫຼື ຮູບພາບ ຫຼື ຕົວຢ່າງຂອງເຄື່ອງໝາຍທີ່ຈະແຈ້ງ. ນອກຈາກນັ້ນ ຍັງຕ້ອງມີໃບມອບສິດ ທີ່ລະບຸຊື່ ແລະ ທີ່ຢູ່ ຂອງຜູ້ຕາງໜ້າ ໃນກໍລະນີທີ່ຍື່ນຄຳຮ້ອງຜ່ານຜູ້ຕາງໜ້າ, ບົດອະທິບາຍກ່ຽວກັບ ສິນຄ້າ ຫຼື ການບໍລິການ ລວມທັງ ລາຍການສິນຄ້າ ຫຼື ການບໍລິການ ທີ່ຈະນຳໃຊ້ເຄື່ອງໝາຍດັ່ງກ່າວ ພ້ອມດ້ວຍໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

ໃນກໍລະນີ ຄຳຮ້ອງບໍ່ໄດ້ລະບຸລາຍການ ສິນຄ້າ ຫຼື ການບໍລິການ ທີ່ຂໍການປົກປ້ອງພາຍໃຕ້ເຄື່ອງໝາຍການຄ້ານັ້ນ, ກົມຊັບສິນທາງປັນຍາຕ້ອງແຈ້ງໃຫ້ຜູ້ຮ້ອງຂໍລະບຸລາຍການ ສິນຄ້າ ຫຼື ການບໍລິການ. ຖ້າຄຳຮ້ອງຫາກລະບຸໝວດສິນຄ້າ ຫຼື ການບໍລິການ ຫຼາຍກວ່າໜຶ່ງໝວດ ຕ້ອງຈ່າຍຄ່າທຳນຽມເປັນແຕ່ລະໝວດ.

**ມາດຕາ 14. ເງື່ອນໄຂຂອງຕົວຢ່າງເຄື່ອງໝາຍ**

ໃນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕ້ອງມີຕົວຢ່າງຂອງເຄື່ອງໝາຍທີ່ຈະແຈ້ງ, ໃນກໍລະນີທີ່ເຄື່ອງໝາຍຫາກເປັນ ຮູບແຕ້ມ ຫຼື ຮູບຖ່າຍ ຫຼື ຮູບພາບ ຕ້ອງໃຫ້ມີຄວາມລະອຽດ ແລະ ຊັດເຈນ ຊຶ່ງ ຕົວຢ່າງຂອງເຄື່ອງໝາຍຕ້ອງສະແດງພຽງແຕ່ເຄື່ອງໝາຍດຽວເທົ່ານັ້ນ ແລະ ຕ້ອງບໍ່ໃຫ້ມີອົງປະກອບອື່ນທີ່ບໍ່ແມ່ນສ່ວນປະກອບຂອງເຄື່ອງໝາຍທີ່ຈະຈົດທະບຽນ ເຊັ່ນ: ຂໍ້ມູນກ່ຽວກັບສິນຄ້າ, ທີ່ມາຂອງສິນຄ້າ, ເຄື່ອງໝາຍຢັ້ງຢືນ ແລະ ຮັບຮອງ (ອຢ, ມລ, ISO) ແລະ ອື່ນໆທີ່ມີຢູ່ໃນສະຫຼາກຂອງສິນຄ້າ.

ໃນກໍລະນີ ຕົວຢ່າງຂອງເຄື່ອງໝາຍ ຫາກບໍ່ມີ ການອອກແບບລວດລາຍ, ຂະໜາດ ຫຼື ສີສະເພາະຂອງຕົວໜັງສື, ຜູ້ຮ້ອງຂໍຕ້ອງຍື່ນຕົວຢ່າງຂອງເຄື່ອງໝາຍໃນຮູບແບບຕົວໜັງສືທີ່ເປັນມາດຕະຖານ ໂດຍລະບຸຊື່ຂອງຮູບແບບຕົວໜັງສື (Font) ທີ່ນຳໃຊ້ເປັນເຄື່ອງໝາຍ.

ໃນກໍລະນີ ທີ່ສີເປັນລັກສະນະຕົ້ນຕໍຂອງເຄື່ອງໝາຍ, ຕົວຢ່າງຂອງເຄື່ອງໝາຍຕ້ອງລະບຸສີຢ່າງຊັດເຈນ ຫຼື ລະບຸລະຫັດຂອງສີ.

ໃນກໍລະນີ ທີ່ເຄື່ອງໝາຍມີລັກສະນະເປັນສາມມິຕິ, ຕົວຢ່າງຂອງເຄື່ອງໝາຍຕ້ອງສະແດງໃນຮູບແບບແຕ່ລະມິຕິ. ຜູ້ຮ້ອງຂໍຕ້ອງລະບຸວ່າເຄື່ອງໝາຍດັ່ງກ່າວເປັນເຄື່ອງໝາຍສາມມິຕິ.

ໃນກໍລະນີ ທີ່ເຄື່ອງໝາຍຫາກເປັນຮູບທີ່ມີການເຄື່ອນເໜັງ, ຕົວຢ່າງຂອງເຄື່ອງໝາຍ ຕ້ອງອະທິບາຍຄວາມໝາຍຂອງເຄື່ອງໝາຍດັ່ງກ່າວ. ຜູ້ຮ້ອງຂໍ ຕ້ອງສະໜອງຕົວຢ່າງຂອງເຄື່ອງໝາຍນັ້ນ ໃນຮູບແບບເຈ້ຍທີ່ສະແດງໃຫ້ເຫັນລາຍລະອຽດຂອງທຸກການເຄື່ອນເໜັງ. ຜູ້ຮ້ອງຂໍຕ້ອງລະບຸວ່າເຄື່ອງໝາຍດັ່ງກ່າວເປັນເຄື່ອງໝາຍເຄື່ອນເໜັງ.

ຕົວຢ່າງຂອງເຄື່ອງໝາຍທີ່ເປັນຮູບແຕ້ມ ຫຼື ຮູບຖ່າຍ ຫຼື ຮູບພາບ ຫຼື ຮູບສາມມິຕິ ຕ້ອງເຮັດໃສ່ເຈ້ຍທີ່ມີຄຸນະພາບ ແລະ ບໍ່ເຫຼື້ອມ ໂດຍສະແດງໃຫ້ເຫັນເຄື່ອງໝາຍຢ່າງຈະແຈ້ງ. ບັນດາເສັ້ນສາຍ ຫຼື ລວດລາຍຕ່າງໆຕ້ອງມີຄວາມຈະແຈ້ງ, ເຂັ້ມ ແລະ ມີຂະໜາດລະຫວ່າງ 4x4 ຊມ ຫາ 6x6 ຊມ. ຜູ້ຮ້ອງຂໍສາມາດສະໜອງສຳເນົາຕົວຢ່າງຂອງເຄື່ອງໝາຍໃນຮູບແບບເອເລັກໂຕຣນິກກໍໄດ້, ຖ້າມີ.

ໃນກໍລະນີ ໄດ້ມີການຮັບເອົາຕົວຢ່າງຂອງເຄື່ອງໝາຍມາກວດສອບແລ້ວ ແຕ່ຍັງບໍ່ສອດຄ່ອງຕາມເງື່ອນໄຂຂອງມາດຕານີ້, ກົມຊັບສິນທາງປັນຍາຕ້ອງແຈ້ງໃຫ້ຜູ້ຮ້ອງຂໍດັດແກ້ ແລ້ວສົ່ງຕົວຢ່າງທີ່ໄດ້ດັດແກ້ນັ້ນ ໃຫ້ກົມຊັບສິນທາງປັນຍາຄືນໃໝ່ ພາຍໃນກຳນົດເວລາ 15 ວັນ ນັບແຕ່ວັນອອກແຈ້ງການເປັນຕົ້ນໄປ.

ທຸກການດັດແກ້ຕົວຢ່າງຂອງເຄື່ອງໝາຍ ຕ້ອງບໍ່ເຮັດໃຫ້ເກີດມີການປ່ຽນແປງລັກສະນະຕົ້ນຕໍຂອງເຄື່ອງໝາຍການຄ້ານັ້ນ.

**ມາດຕາ 15. ລາຍການ ສິນຄ້າ ຫຼື ການບໍລິການ**

ຜູ້ຮ້ອງຂໍຕ້ອງລະບຸ ລາຍການ ສິນຄ້າ ຫຼື ການບໍລິການ ຊຶ່ງ ກ່ຽວຂ້ອງກັບເຄື່ອງໝາຍທີ່ຜູ້ຮ້ອງຂໍນຳໃຊ້ ຫຼື ຈະນຳໃຊ້ຢ່າງບໍລິສຸດໃຈ ແລະ ຈັດປະເພດລາຍການ ສິນຄ້າ ຫຼື ການບໍລິການ ຕາມການຈັດໝວດທີ່ກ່ຽວຂ້ອງ. ການລະບຸລາຍການ ສິນຄ້າ ຫຼື ການບໍລິການ ເຊັ່ນ "ສິນຄ້າທັງໝົດ", "ການບໍລິການທັງໝົດ", "ສິນຄ້າອື່ນໆທັງໝົດ" ຫຼື "ການບໍລິການອື່ນໆທັງໝົດ" ຫຼື ການລະບຸພຽງແຕ່ ເລກລະຫັດໝວດ ຫຼື ຊື່ໝວດຂອງ ສິນຄ້າ ຫຼື ການບໍລິການ ແມ່ນບໍ່ສາມາດເຮັດໄດ້.

ການລະບຸ ສິນຄ້າ ຫຼື ການບໍລິການ ຫຼື ທັງສອງຢ່າງ ຕ້ອງໃຫ້ສອດຄ່ອງຕາມການຈັດໝວດສາກົນ ຫຼື ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 16 ຂອງຂໍ້ຕົກລົງສະບັບນີ້. ຖ້າຫາກບໍ່ສາມາດລະບຸ ສິນຄ້າ ຫຼື ການບໍລິການ ຫຼື ທັງສອງຢ່າງໄດ້ ຜູ້ຮ້ອງຂໍຕ້ອງສະໜອງຂໍ້ມູນຢ່າງຄົບຖ້ວນ ເພື່ອໃຫ້ກົມຊັບສິນທາງປັນຍາສາມາດລະບຸໝວດ ສິນຄ້າ ຫຼື ການບໍລິການ ຫຼື ທັງສອງຢ່າງ.

**ມາດຕາ 16. ການຈັດໝວດສາກົນກ່ຽວກັບ ສິນຄ້າ ແລະ ການບໍລິການ**

ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕ້ອງລະບຸໝວດ ຕາມການຈັດໝວດສາກົນ ສຳລັບລາຍການສິນຄ້າ ຫຼື ການບໍລິການ.

ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍລວມໝູ່ ຕ້ອງລະບຸໝວດ ຕາມການຈັດໝວດສາກົນ ສຳລັບລາຍ ການສິນຄ້າ ຫຼື ການບໍລິການທີ່ຈະນຳໃຊ້ເຄື່ອງໝາຍລວມໝູ່.

ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍຮັບຮອງ ຕ້ອງລະບຸໝວດ ຕາມການຈັດໝວດສາກົນ ສຳລັບລາຍ ການສິນຄ້າ ຫຼື ການບໍລິການທີ່ຈະຮັບຮອງ.

ເນື່ອງຈາກວ່າການຈັດໝວດສາກົນມີການປ່ຽນແປງເປັນແຕ່ລະໄລຍະ, ດັ່ງນັ້ນ ຄຳຮ້ອງຕ້ອງລະບຸການຈັດໝວດ ສິນຄ້າ ຫຼື ການບໍລິການ ຕາມການຈັດໝວດສາກົນທີ່ກຳລັງນຳໃຊ້ໃນເວລາຍື່ນຄຳຮ້ອງ.

ໃນກໍລະນີ ທີ່ການຈັດໝວດສາກົນຫາກມີການປ່ຽນແປງໃນລະຫວ່າງການດຳເນີນການພິຈາລະນາ ຄຳຮ້ອງ ກົມຕ້ອງແຈ້ງໃຫ້ຜູ້ຮ້ອງຂໍນັ້ນດັດແກ້ຄຳຮ້ອງເພື່ອລະບຸໝວດທີ່ຖືກຕ້ອງ. ຖ້າການປ່ຽນແປງການຈັດໝວດຂອງສາກົນ ຫາກເປັນສາເຫດໃຫ້ຄຳຮ້ອງມີໝວດເພີ່ມຂຶ້ນ, ຜູ້ຮ້ອງຂໍບໍ່ ຕ້ອງຈ່າຍຄ່າທຳນຽມສຳລັບໝວດທີ່ເພີ່ມຂຶ້ນ, ແຕ່ຕ້ອງໄດ້ຈ່າຍຄ່າທຳນຽມສຳລັບແຕ່ລະໝວດ ສິນຄ້າ ຫຼື ບໍລິການນັ້ນໃນເວລາມາຕໍ່ອາຍຸການປົກປ້ອງເຄື່ອງໝາຍດັ່ງກ່າວ.

ການຈົດທະບຽນເຄື່ອງໝາຍການຄ້າ ຈະປົກປ້ອງພຽງແຕ່ລາຍການ ສິນຄ້າ ຫຼື ການບໍລິການ ທີ່ລະບຸຢູ່ໃນໝວດຂອງຄຳຮ້ອງທີ່ຍື່ນມາເທົ່ານັ້ນ, ແຕ່ບໍ່ກວມເອົາລາຍການ ສິນຄ້າ ຫຼື ການບໍລິການອື່ນທີ່ບໍ່ໄດ້ລະບຸມາ ຊຶ່ງນອນຢູ່ໃນໝວດດຽວກັນ. ສຳລັບເຄື່ອງໝາຍການຄ້າທີ່ຈົດທະບຽນກ່ອນໜ້າຂໍ້ຕົກລົງສະບັບນີ້ ທີ່ໄດ້ລະບຸຄຳວ່າ "ສິນຄ້າ ຫຼື ການບໍລິການ ທັງໝົດຂອງໝວດ" ຢູ່ໃນໃບຢັ້ງຢືນການຈົດທະບຽນ

ເຄື່ອງໝາຍການຄ້າ ຍັງມີຜົນສັກສິດຈົນກວ່າຈະໝົດອາຍຸ. ໃນເວລາມາຕໍ່ອາຍຸ ໃຫ້ລະບຸລາຍການ ສິນຄ້າ ຫຼື ການບໍລິການ ຢູ່ໃນໝວດນັ້ນ, ຖ້າບໍ່ດັ່ງນັ້ນ ກົມຊັບສິນທາງປັນຍາຈະປະຕິເສດການຕໍ່ອາຍຸດັ່ງກ່າວ.

**ມາດຕາ 17. ຫຼັກການພິຈາລະນາຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ**

ການພິຈາລະນາຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕ້ອງປະຕິບັດຕາມຫຼັກການດັ່ງທີ່ໄດ້ກໍານົດໄວ້ໃນ ມາດຕາ 28 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ, ໃນກໍລະນີ ທີ່ມີການຍື່ນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າຫຼາຍສະບັບໃນໄລຍະດຽວກັນ ຊຶ່ງມີເຄື່ອງໝາຍ ດຽວກັນ ຫຼື ຄ້າຍຄືກັນ ແລະ ສໍາລັບສິນຄ້າດຽວກັນ ຫຼື ຄ້າຍຄືກັນ, ໃຫ້ພິຈາລະນາຄໍາຮ້ອງທີ່ມີວັນບູລິມະສິດກ່ອນ. ໃນເມື່ອກົມຊັບສິນທາງປັນຍາໄດ້ດໍາເນີນການຕາມຂັ້ນຕອນການພິຈາລະນາຄໍາຮ້ອງແລ້ວ ຄໍາຮ້ອງທີ່ໄດ້ຮັບວັນບູລິມະສິດກ່ອນຈະໄດ້ຮັບການຈົດທະບຽນ, ພ້ອມທັງອອກໜັງສືແຈ້ງປະຕິເສດ ຄໍາຮ້ອງ ຫຼື ບັນດາຄໍາຮ້ອງ ທີ່ໄດ້ຮັບວັນບູລິມະສິດຕາມຫຼັງ. ຖ້າວ່າຂັ້ນຕອນການພິຈາລະນາຄໍາຮ້ອງ ທີ່ໄດ້ຮັບວັນບູລິມະສິດຕາມຫຼັງ ຫາກສໍາເລັດກ່ອນ ແລະ ຄໍາຮ້ອງດັ່ງກ່າວມີເງື່ອນໄຂໄດ້ຮັບການຈົດທະບຽນ, ກົມຊັບສິນທາງປັນຍາ ຕ້ອງໂຈະຂັ້ນຕອນພິຈາລະນາຕໍ່ຄໍາຮ້ອງດັ່ງກ່າວໄວ້ກ່ອນ ຈົນກວ່າການພິຈາລະນາຄໍາຮ້ອງທີ່ໄດ້ຮັບວັນບູລິມະສິດກ່ອນນັ້ນ ຈະສິ້ນສຸດລົງ.

ໃນກໍລະນີ ທີ່ຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຫາກມີເຄື່ອງໝາຍ ຄືກັນ ຫຼື ຄ້າຍຄືກັນ ກັບ ເຄື່ອງໝາຍທີ່ມີຊື່ສຽງ ຫຼື ຖິ່ນກໍາເນີດ, ຄໍາຮ້ອງດັ່ງກ່າວມີສິດໄດ້ຮັບການພິຈາລະນາ ແຕ່ຕ້ອງມີເງື່ອນໄຂວ່າໄດ້ຮັບວັນບູລິມະສິດກ່ອນ ເຄື່ອງໝາຍທີ່ມີຊື່ສຽງ ຫຼື ຖິ່ນກໍາເນີດ ຊຶ່ງໄດ້ຮັບການຈົດທະບຽນຢູ່ ສປປ ລາວ ຫຼື ປະເທດໃດໜຶ່ງແລ້ວ.ກົມຊັບສິນທາງປັນຍາຈະບໍ່ໃຫ້ຄໍາປຶກສາທາງດ້ານກົດໝາຍ ແລະ ບໍ່ໃຫ້ຄໍາແນະນໍາກ່ຽວກັບຄວາມເປັນໄປໄດ້ວ່າ ເຄື່ອງໝາຍການຄ້ານັ້ນສອດຄ່ອງຕາມກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

## ໝວດທີ 3

## ການກວດສອບເບື້ອງຕົ້ນ, ການແຍກຄໍາຮ້ອງ, ການເຜີຍແຜ່ ແລະ ການຄັດຄ້ານ ຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ

**ມາດຕາ 18. ການກວດສອບເບື້ອງຕົ້ນ ຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ**

ພາຍຫຼັງ ຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າໄດ້ຮັບເລກທີຍື່ນຄໍາຮ້ອງແລ້ວ ກົມຊັບສິນທາງປັນຍາ ຕ້ອງດໍາເນີນການກວດສອບເບື້ອງຕົ້ນ ກ່ຽວກັບຄວາມ ຄົບຖ້ວນ, ຖືກຕ້ອງ ແລະ ສອດຄ່ອງ ຕາມເງື່ອນໄຂຂອງສໍານວນຄໍາຮ້ອງ ດັ່ງທີ່ໄດ້ກໍານົດໄວ້ໃນ ມາດຕາ 33 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 9, 12, 14, 15 ແລະ 16 ຂອງຂໍ້ຕົກລົງສະບັບນີ້. ການກວດສອບເບື້ອງຕົ້ນຕ້ອງດໍາເນີນການພາຍໃນກໍານົດເວລາ 60 ວັນ ນັບແຕ່ວັນຮັບຄໍາຮ້ອງເປັນຕົ້ນໄປ.

ສໍາລັບຄໍາຮ້ອງຂໍຈົດທະບຽນ ເຄື່ອງໝາຍຮັບຮອງ ຫຼື ເຄື່ອງໝາຍລວມໝູ່ ຍັງຕ້ອງໄດ້ກວດສອບວ່າມີ ເງື່ອນໄຂຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 3, ມາດຕາ 9 ຫຼື ຂໍ້ 4, ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້ ຫຼືບໍ່.

ໃນກໍລະນີ ສຳນວນຄຳຮ້ອງຫາກ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ຫຼື ບໍ່ສອດຄ່ອງ ຕາມເງື່ອນໄຂ, ກົມ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຊາບ ເພື່ອສະໜອງ ຫຼື ດັດແກ້ ໃຫ້ໄດ້ຕາມເງື່ອນໄຂດັ່ງກ່າວ ພາຍໃນໄລຍະເວລາ 60 ວັນ ນັບແຕ່ວັນທີອອກແຈ້ງການເປັນຕົ້ນໄປ.

ໃນກໍລະນີ ຜູ້ຮ້ອງຂໍຫາກບໍ່ສາມາດປະຕິບັດພາຍໃນກຳນົດເວລາດັ່ງກ່າວ ກົມຊັບສິນທາງປັນຍາຈະ ອອກ ແຈ້ງການໃຫ້ຜູ້ກ່ຽວຊາບ ວ່າຄຳຮ້ອງດັ່ງກ່າວຈະບໍ່ຖືກພິຈາລະນາ ແລະ ຖືວ່າສະຫຼະສິດ.

ໃນກໍລະນີ ສຳນວນຄຳຮ້ອງຫາກສອດຄ່ອງຕາມເງື່ອນໄຂການກວດສອບເບື້ອງຕົ້ນ ກົມຊັບສິນ ທາງປັນຍາຈະນຳເອົາຄຳຮ້ອງດັ່ງກ່າວ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບຊັບສິນອຸດ ສາຫະກຳ.

## ມາດຕາ 19. ການແຍກຄຳຮ້ອງ

ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າໃດໜຶ່ງ ສາມາດແຍກອອກເປັນ ສອງ ຫຼື ຫຼາຍ ສະບັບ ໄດ້ທຸກເວລາ ແຕ່ຕ້ອງເຮັດກ່ອນໜ້າການອອກໃບຢັ້ງຢືນການຈົດທະບຽນ, ການປະຕິເສດ, ການຍົກເລີກ. ການຍື່ນຄຳຮ້ອງທີ່ແຍກອອກມານັ້ນ ຕ້ອງມີການອ້າງອີງເຖິງຄຳຮ້ອງສະບັບເດີມທີ່ຍື່ນກ່ອນໜ້າທີ່ຖືກແຍກ ແລະ ໃຫ້ອະທິບາຍວ່າ ຄຳຮ້ອງທີ່ຍື່ນມາໃໝ່ນັ້ນ ແມ່ນຄຳຮ້ອງທີ່ ແຍກອອກມາຈາກຄຳຮ້ອງສະບັບເດີມ, ໂດຍລະບຸ ເລກທີ ແລະ ວັນທີ ຍື່ນຄຳຮ້ອງສະບັບເດີມໃສ່ ຄຳຮ້ອງທີ່ຍື່ນມາໃໝ່ແຕ່ລະສະບັບ. ຄຳຮ້ອງສະບັບ ເດີມ ຕ້ອງໄດ້ດັດແກ້ໂດຍຮັກສາໄວ້ແຕ່ ລາຍການ ຫຼື ໝວດສິນຄ້າ ຫຼື ໝວດການບໍລິການ ທີ່ຍັງເຫຼືອ. ຄຳ ຮ້ອງທີ່ແຍກອອກມານັ້ນ ຕ້ອງຍື່ນພ້ອມກັນກັບຄຳຮ້ອງສະບັບເດີມທີ່ຖືກດັດແກ້ແລ້ວ ໂດຍປະຕິບັດຕາມທີ່ ໄດ້ກຳນົດໄວ້ໃນ ມາດຕາ 11 ຂອງຂໍ້ຕົກລົງສະບັບນີ້.

ຄຳຮ້ອງທີ່ແຍກອອກມາແຕ່ລະສະບັບນັ້ນ ມີສິດໄດ້ຮັບວັນທີຍື່ນຄຳຮ້ອງ ຕາມຄຳຮ້ອງສະບັບເດີມ. ຄຳຮ້ອງທີ່ແຍກອອກມາແຕ່ລະສະບັບ ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ.

## ມາດຕາ 20. ການເຜີຍແຜ່ຄຳຮ້ອງ

ພາຍຫຼັງ ກົມຊັບສິນທາງປັນຍາ ສຳເລັດ ການກວດສອບເບື້ອງຕົ້ນຂອງສຳນວນຄຳຮ້ອງຂໍຈົດ ທະບຽນເຄື່ອງໝາຍການຄ້າເປັນຕົ້ນໄປ, ພາຍໃນໄລຍະເວລາ 15 ວັນ ກົມຕ້ອງເຜີຍແຜ່ຄຳຮ້ອງດັ່ງກ່າວ ລົງ ໃນຈົດໝາຍເຫດທາງລັດຖະການກ່ຽວກັບຊັບສິນອຸດສາຫະກຳ ພາຍໃນໄລຍະເວລາ 60 ວັນ ນັບແຕ່ວັນທີ ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບຊັບສິນອຸດສາຫະກຳ ເພື່ອໃຫ້ບຸກຄົນທີສາມ ສາມາດສະເໜີຄັດຄ້ານຄຳຮ້ອງດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 39 ຂອງກົດໝາຍວ່າດ້ວຍຊັບສິນ ທາງປັນຍາ.

ການເຜີຍແຜ່ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ລົງໃນຈົດໝາຍເຫດທາງລັດຖະການກ່ຽວ ກັບຊັບສິນອຸດສາຫະກຳ ຕ້ອງປະກອບມີຂໍ້ມູນ ດັ່ງນີ້:

1. ເຄື່ອງໝາຍການຄ້າ;
2. ໝວດຂອງສິນຄ້າ ແລະ/ຫຼື ການບໍລິການ;
3. ເລກທີ ແລະ ວັນທີຍື່ນຄຳຮ້ອງ;
4. ຊື່ ແລະ ທີ່ຢູ່ ຂອງຜູ້ຍື່ນຄຳຮ້ອງ;
5. ຂໍ້ຈຳກັດໃນການຂໍປົກປ້ອງ.

## ມາດຕາ 21. ຂັ້ນຕອນການຄັດຄ້ານຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ

ພາຍຫຼັງ ຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ໄດ້ຖືກເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບຊັບສິນອຸດສາຫະກໍາ, ບຸກຄົນທີສາມມີສິດຍື່ນຄໍາຮ້ອງຂໍຄັດຄ້ານຄໍາຮ້ອງດັ່ງກ່າວ ເຖິງກົມຊັບສິນທາງປັນຍາ ໂດຍປະກອບຕາມແບບພິມຂອງກົມ ພ້ອມທັງຈ່າຍຄ່າທໍານຽມ ແລະ ຄ່າບໍລິການ.

ສໍານວນຄໍາຮ້ອງຂໍຄັດຄ້ານຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າຕ້ອງປະກອບມີເອກະສານດັ່ງນີ້:

1. ໃບຄໍາຮ້ອງຂໍຄັດຄ້ານຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ;
2. ເອກະສານ ແລະ ຫຼັກຖານຊີ້ແຈງ ກ່ຽວກັບການຄັດຄ້ານ.

## ມາດຕາ 22. ຂັ້ນຕອນພິຈາລະນາການຄັດຄ້ານ ຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ

ພາຍຫຼັງ ກົມຊັບສິນທາງປັນຍາໄດ້ຮັບຄໍາຮ້ອງຂໍຄັດຄ້ານແລ້ວ ກົມຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າທີ່ຖືກຄັດຄ້ານນັ້ນຊາບຢ່າງທັນການ. ຜູ້ຮ້ອງຂໍຈົດທະບຽນຕ້ອງຍື່ນຄໍາຊີ້ແຈງພ້ອມດ້ວຍຂໍ້ມູນຫຼັກຖານກ່ຽວກັບ ເຄື່ອງໝາຍຂອງຕົນ ເຖິງກົມ ພາຍໃນກໍານົດເວລາ 60 ວັນ ນັບແຕ່ວັນທີທີ່ໄດ້ອອກແຈ້ງການກ່ຽວກັບການຄັດຄ້ານດັ່ງກ່າວ ແລະ ກົມຕ້ອງສົ່ງສໍາເນົາຄໍາຊີ້ແຈງນັ້ນໃຫ້ຜູ້ຂໍຄັດຄ້ານຊາບ.

ພາຍຫຼັງ ກົມຊັບສິນທາງປັນຍາໄດ້ຮັບຄໍາ ຊີ້ແຈງ ພ້ອມດ້ວຍຂໍ້ມູນຫຼັກຖານ ຈາກຜູ້ຍື່ນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າແລ້ວ ກົມຕ້ອງພິຈາລະນາຄໍາຊີ້ແຈງ ແລະ ຂໍ້ມູນຫຼັກຖານດັ່ງກ່າວ. ໃນກໍລະນີຂໍ້ມູນຫຼັກຖານຫາກບໍ່ຄົບຖ້ວນ ຫຼື ຊັດເຈນ ກົມຊັບສິນທາງປັນຍາອາດຈະອອກໜັງສືເຊີນໃຫ້ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ແລະ/ຫຼື ຜູ້ຂໍຄັດຄ້ານ ມາຊີ້ແຈງ ຫຼື ສະແດງຫຼັກຖານ ຫຼື ສະໜອງຂໍ້ມູນເພີ່ມເຕີມ. ຖ້າຜູ້ຮ້ອງຂໍຈົດທະບຽນ ຫຼື ຜູ້ຂໍຄັດຄ້ານຫາກບໍ່ປະຕິບັດຕາມໜັງສືເຊີນຂອງກົມພາຍໃນກໍານົດເວລາ 60 ວັນ ນັບແຕ່ວັນອອກໜັງສືເຊີນ ກົມຈະພິຈາລະນາການຄັດຄ້ານຕາມຫຼັກຖານທີ່ມີ.

ພາຍຫຼັງພິຈາລະນາ ການຄັດຄ້ານ ກົມຊັບສິນທາງປັນຍາຕ້ອງແຈ້ງຜົນການພິຈາລະນາພ້ອມດ້ວຍເຫດຜົນໃຫ້ຜູ້ຮ້ອງຂໍຈົດທະບຽນ ແລະ ຜູ້ຂໍຄັດຄ້ານຊາບ.

ໃນກໍລະນີ ກົມຊັບສິນທາງປັນຍາຫາກພິຈາລະນາແລ້ວເຫັນວ່າ ການຄັດຄ້ານນັ້ນມີເຫດຜົນ ແລະ ມີຫຼັກຖານ ທີ່ພຽງພໍ ກົມຈະປະຕິເສດຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າດັ່ງກ່າວ, ຜູ້ຮ້ອງຂໍຈົດທະບຽນສາມາດສະເໜີຂໍອຸທອນ ຕໍ່ການປະຕິເສດດັ່ງກ່າວ.

ໃນກໍລະນີ ກົມຊັບສິນທາງປັນຍາຫາກພິຈາລະນາແລ້ວເຫັນວ່າ ການຄັດຄ້ານນັ້ນບໍ່ມີເຫດຜົນ ແລະ ບໍ່ມີຫຼັກຖານ ທີ່ພຽງພໍ ກົມຈະດໍາເນີນການຕາມຂັ້ນຕອນຂອງການຈົດທະບຽນເຄື່ອງໝາຍການຄ້າ.

ຖ້າຄູ່ກໍລະນີຫາກ ບໍ່ພໍໃຈຕໍ່ຜົນການພິຈາລະນາດັ່ງກ່າວ ສາມາດຂໍອຸທອນ ເຖິງຄະນະກໍາມະການອຸທອນຂອງກົມຊັບສິນທາງປັນຍາ ພາຍໃນກໍານົດເວລາ 60 ວັນ ນັບແຕ່ມື້ອອກແຈ້ງການເປັນຕົ້ນໄປ.

# ໝວດທີ 4
# ການກວດສອບເນື້ອໃນ ແລະ ການຈົດທະບຽນເຄື່ອງໝາຍການຄ້າ

**ມາດຕາ 23. ການກວດສອບເນື້ອໃນ**

ພາຍຫຼັງສຳເລັດການກວດສອບເບື້ອງຕົ້ນແລ້ວ ກົມຊັບສິນທາງປັນຍາຕ້ອງ ດຳເນີນການກວດສອບເນື້ອໃນ ໂດຍອີງຕາມຖານຂໍ້ມູນຂອງກົມຊັບສິນທາງປັນຍາ ແລະ ສາກົນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 40 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ເພື່ອພິຈາລະນາວ່າຄຳຮ້ອງນັ້ນສອດຄ່ອງຕາມເງື່ອນໄຂທີ່ກຳນົດໄວ້ໃນ ມາດຕາ 16 ແລະ 23 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 17 ຂອງຂໍ້ຕົກລົງສະບັບນີ້.

ໃນກໍລະນີ ສຳນວນຄຳຮ້ອງຫາກບໍ່ສອດຄ່ອງຕາມເງື່ອນໄຂການຈົດທະບຽນ ກົມຊັບສິນທາງປັນຍາຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຊາບກ່ຽວກັບເຫດຜົນໃນການປະຕິເສດເບື້ອງຕົ້ນກ່ຽວກັບສິດ ທີ່ຂໍການປົກປ້ອງ ບາງສ່ວນ ຫຼື ທັງໝົດ ທີ່ຜູ້ຮ້ອງຂໍໄດ້ສະເໜີມາ. ພາຍຫຼັງທີ່ໄດ້ຮັບແຈ້ງການປະຕິເສດເບື້ອງຕົ້ນແລ້ວ ຜູ້ຮ້ອງຂໍມີໜ້າທີ່ສະໜອງຂໍ້ມູນ ແລະ ເອກະສານ ຫຼື ຄຳຊີ້ແຈງຕໍ່ກົມ ພາຍໃນໄລຍະເວລາ 60 ວັນ ນັບແຕ່ວັນທີ່ໄດ້ອອກແຈ້ງການເປັນຕົ້ນໄປ. ໃນກໍລະນີຈຳເປັນ ກົມສາມາດຂໍເອົາຂໍ້ມູນເພີ່ມເຕີມຈາກຜູ້ຮ້ອງຂໍ. ຖ້າ ຜູ້ຮ້ອງຂໍຫາກບໍ່ປະຕິບັດຕາມກຳນົດເວລາໃນແຈ້ງການ ຄຳຮ້ອງດັ່ງກ່າວຈະບໍ່ຖືກພິຈາລະນາ ແລະ ຖືວ່າ ຖືກສະຫຼະສິດ. ເຖິງຢ່າງໃດກໍຕາມ, ຖ້າຫາກມີເຫດຜົນພຽງພໍ ກົມສາມາດຕໍ່ເວລາໃຫ້ຕື່ມອີກ 30 ວັນ ນັບແຕ່ວັນສິ້ນສຸດແຈ້ງການຄັ້ງທຳອິດເປັນຕົ້ນໄປ. ຖ້າຫາກຜູ້ຮ້ອງຂໍໄດ້ສະໜອງຂໍ້ມູນ ແລະ ເອກະສານ ຫຼື ຄຳຊີ້ແຈງຕໍ່ກົມແລ້ວແຕ່ຍັງບໍ່ທັນພຽງພໍ, ກົມຈະປະຕິເສດຂັ້ນສຸດທ້າຍ ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າດັ່ງກ່າວ ແລະ ແຈ້ງໃຫ້ຜູ້ຮ້ອງຂໍຊາບ.

**ມາດຕາ 24. ການບໍ່ອະນຸຍາດໃຫ້ຖືສິດແຕ່ພຽງຜູ້ດຽວ**

ໃນກໍລະນີ ເຄື່ອງໝາຍທີ່ຂໍການປົກປ້ອງຫາກປະກອບດ້ວຍຄຳສັບ ທີ່ເປັນຄຳອະທິບາຍ ຫຼື ຄຳເວົ້າທົ່ວໄປ ເປັນຕົ້ນການບົ່ງບອກຄຸນນະພາບ, ຄຸນລັກສະນະຂອງ ສິນຄ້າ ຫຼື ການບໍລິການ ກົມຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຊາບວ່າ ຄຳສັບດັ່ງກ່າວບໍ່ສາມາດຮຽກຮ້ອງສິດໄດ້ ເພື່ອບໍ່ເປັນການກີດກັ້ນ ຜູ້ຜະລິດອື່ນ ຫຼື ຜູ້ສະໜອງອື່ນ ນຳໃຊ້ຄຳສັບດຽວກັນນັ້ນ ສຳລັບສິນຄ້າ ຫຼື ການບໍລິການ ທີ່ບົ່ງບອກຄຸນນະພາບ ຫຼື ຄຸນລັກສະນະດຽວກັນ.

ໃນກໍລະນີ ເຄື່ອງໝາຍດັ່ງກ່າວຫາກເປັນ ຄຳອະທິບາຍ ຫຼື ເປັນຄຳເວົ້າທົ່ວໄປ ກົມຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຊີ້ແຈງວ່າ ຄຳສັບດັ່ງກ່າວເປັນສ່ວນໜຶ່ງຂອງເຄື່ອງໝາຍ ຫຼືບໍ່. ຖ້າຫາກວ່າຄຳສັບນັ້ນເປັນສ່ວນໜຶ່ງຂອງເຄື່ອງໝາຍ ກົມຕ້ອງແຈ້ງໃຫ້ຜູ້ຮ້ອງຂໍດັດແກ້ເຄື່ອງໝາຍ ໂດຍລຶບຄຳສັບດັ່ງກ່າວນັ້ນອອກ.

**ມາດຕາ 25. ການດັດແກ້ປະເພດເຄື່ອງໝາຍ**

ອີງຕາມ ມາດຕາ 42 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 28 ຂອງຂໍ້ຕົກລົງສະບັບນີ້, ເຄື່ອງໝາຍໃດໜຶ່ງ ທີ່ໄດ້ລະບຸໄວ້ໃນຄຳຮ້ອງຂໍຈົດທະບຽນທີ່ໄດ້ຍື່ນ ໃນເບື້ອງຕົ້ນ ສາມາດດັດແກ້ມາເປັນເຄື່ອງໝາຍການຄ້າ ຫຼື ເຄື່ອງໝາຍລວມໝູ່ ຫຼື ເຄື່ອງໝາຍຮັບຮອງ ກໍໄດ້.

ໃນກໍລະນີ ເຄື່ອງໝາຍດັ່ງກ່າວຫາກຖືກດັດແກ້ມາເປັນ ເຄື່ອງໝາຍລວມໝູ່ ຫຼື ເຄື່ອງໝາຍຮັບຮອງ ຜູ້ຮ້ອງຂໍຕ້ອງຍື່ນຄຳຮ້ອງຂໍຈົດທະບຽນຄືນໃໝ່ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງ.

**ມາດຕາ 26. ການດັດແກ້ໃນໄລຍະການກວດສອບ**

ໃນໄລຍະທີ່ ກົມກຳລັງດຳເນີນການກວດສອບຢູ່ນັ້ນ ຜູ້ຮ້ອງຂໍສາມາດດັດແກ້ຄຳຮ້ອງໄດ້ທຸກເວລາ, ແຕ່ຕ້ອງດຳເນີນກ່ອນໜ້າ ການຈົດທະບຽນ, ການສະຫຼະສິດ, ການປະຕິເສດຂັ້ນສຸດທ້າຍ ຫຼື ການສິ້ນສຸດການພິຈາລະນາອື່ນໆຂອງຄຳຮ້ອງດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 42 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໂດຍບໍ່ຕ້ອງຈ່າຍ ຄ່າທຳນຽມ ແລະ ຄ່າບໍລິການ, ຊຶ່ງການດັດແກ້ຄຳຮ້ອງນັ້ນ ຕ້ອງບໍ່ໃຫ້ເພີ່ມລາຍການ ຫຼື ໝວດ ສິນຄ້າ ຫຼື ການບໍລິການ ຫຼື ປ່ຽນແປງລັກສະນະຕົ້ນຕໍຂອງເຄື່ອງໝາຍຢູ່ໃນສຳນວນຄຳຮ້ອງດັ່ງກ່າວ.

**ມາດຕາ 27. ການເພີ່ມໝວດ ສິນຄ້າ ຫຼື ການບໍລິການ**

ຜູ້ຮ້ອງຂໍສາມາດຂໍເພີ່ມໝວດ ສິນຄ້າ ຫຼື ການບໍລິການ ແຕ່ຕ້ອງໄດ້ຈ່າຍຄ່າທຳນຽມແຕ່ລະໝວດ ສິນຄ້າ ຫຼື ການບໍລິການ ຕາມແຕ່ລະກໍລະນີ ດັ່ງນີ້:

1. ກ່ອນການຈົດທະບຽນເຄື່ອງໝາຍການຄ້າ ຊຶ່ງຢູ່ໃນໄລຍະການກວດສອບຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ;
2. ພາຍຫຼັງການຈົດທະບຽນເຄື່ອງໝາຍການຄ້າ.

ການຂໍເພີ່ມໝວດ ສິນຄ້າ ຫຼື ການບໍລິການ ຕ້ອງໄດ້ຍື່ນໃບສະເໜີຂໍເພີ່ມໝວດ ຕາມແບບພິມຂອງກົມ ໂດຍລະບຸ ໝວດ ແລະ ລາຍການສິນຄ້າ ຫຼື ການບໍລິການ ທີ່ຕ້ອງການເພີ່ມເຕີມນັ້ນ.

ສຳລັບການຂໍເພີ່ມໝວດ ສິນຄ້າ ຫຼື ການບໍລິການ ພາຍຫຼັງການຈົດທະບຽນເຄື່ອງໝາຍການຄ້າແລ້ວ ຜູ້ຮ້ອງຂໍຕ້ອງໄດ້ຍື່ນຄຳຮ້ອງຄືນໃໝ່ຕາມແບບພິມຂອງກົມ ພ້ອມທັງຈ່າຍ ຄ່າທຳນຽມ ແລະ ຄ່າບໍລິການ.

**ມາດຕາ 28. ການຈົດທະບຽນ ແລະ ການເຜີຍແຜ່ຜົນຂອງການຈົດທະບຽນ**

ໃນກໍລະນີທີ່ ຄຳຮ້ອງຫາກສອດຄ່ອງກັບເງື່ອນໄຂການປົກປ້ອງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້ ກົມຕ້ອງຈົດທະບຽນເຄື່ອງໝາຍການຄ້າ, ບັນທຶກຂໍ້ມູນທີ່ກ່ຽວຂ້ອງລົງໃນປຶ້ມບັນທຶກການຈົດທະບຽນ, ຖານຂໍ້ມູນ ແລະ ເຜີຍແຜ່ຜົນຂອງການຈົດທະບຽນເຄື່ອງໝາຍການຄ້າ ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບຊັບສິນອຸດສາຫະກຳຕາມທີ່ໄດ້ກຳນົດໄວ້ໃນມາດຕາ 44 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ໃນກໍລະນີທີ່ຄຳຮ້ອງ ຖືກຄັດຄ້ານ, ພາຍຫຼັງສຳເລັດຂັ້ນຕອນການພິຈາລະນາການຄັດຄ້ານ ຫຼື ການຂໍອຸທອນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 22 ຂອງຂໍ້ຕົກລົງສະບັບນີ້ ຖ້າຫາກເຫັນວ່າ ການຄັດຄ້ານ ຫຼື ການຂໍອຸທອນນັ້ນ ບໍ່ເປັນຜົນ ກົມຕ້ອງຈົດທະບຽນເຄື່ອງໝາຍການຄ້າດັ່ງກ່າວ.

ໃນກໍລະນີທີ່ຄຳຮ້ອງຫາກຖືກໂອນສິດ ຜູ້ຮ້ອງຂໍສາມາດສະເໜີໃຫ້ເຜີຍແຜ່ຜົນຂອງການໂອນສິດນັ້ນ ພາຍຫຼັງທີ່ສະໜອງຂໍ້ມູນທີ່ກ່ຽວຂ້ອງຢ່າງຄົບຖ້ວນ ພ້ອມທັງຈ່າຍຄ່າບໍລິການ.

ໃນກໍລະນີ ການເຜີຍແຜ່ຫາກມີຂໍ້ຜິດພາດ ຜູ້ຮ້ອງຂໍສາມາດສະເໜີໃຫ້ກົມ ເຜີຍແຜ່ຄືນໃໝ່ພ້ອມດ້ວຍຂໍ້ມູນທີ່ຖືກດັດແກ້ໂດຍບໍ່ຕ້ອງຈ່າຍຄ່າບໍລິການ ຊຶ່ງການສະເໜີຂໍດັດແກ້ດັ່ງກ່າວຕ້ອງຍື່ນພາຍໃນ 60 ວັນນັບແຕ່ວັນເຜີຍແຜ່ຄັ້ງທຳອິດ.

## ໝວດທີ 5
## ການດຳເນີນການຕ່າງໆ ຫຼັງການຈົດທະບຽນເຄື່ອງໝາຍການຄ້າ ແລະ ອາຍຸການປົກປ້ອງ

**ມາດຕາ 29. ການປ່ຽນຊື່ ແລະ/ຫຼື ທີ່ຢູ່**

ພາຍຫຼັງທີ່ໄດ້ຮັບການຈົດທະບຽນແລ້ວ ເຈົ້າຂອງເຄື່ອງໝາຍການຄ້າສາມາດຍື່ນຄຳຮ້ອງຢູ່ນຳກົມຊັບສິນທາງປັນຍາ ເພື່ອປ່ຽນແປງຂໍ້ມູນກ່ຽວກັບ ຊື່ ແລະ/ຫຼື ທີ່ຢູ່ ຂອງຕົນ ພ້ອມທັງຈ່າຍຄ່າບໍລິການ;

ການຍື່ນຄຳຮ້ອງຂໍປ່ຽນ ຊື່ ແລະ/ຫຼື ທີ່ຢູ່ ເຈົ້າຂອງເຄື່ອງໝາຍການຄ້າໃຫ້ປະຕິບັດຕາມແບບພິມຂອງກົມຊັບສິນທາງປັນຍາ. ຜູ້ຍື່ນຄຳຮ້ອງຕ້ອງສະໜອງຂໍ້ມູນ ໃຫ້ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງຂໍ້ຕົກລົງສະບັບນີ້. ກົມຊັບສິນທາງປັນຍາຕ້ອງບັນທຶກທຸກການປ່ຽນແປງລົງໃນ ຖານຂໍ້ມູນ, ປື້ມບັນທຶກການຈົດທະບຽນ ແລະ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບຊັບສິນອຸດສາ ຫະກຳ.

**ມາດຕາ 30. ການສຳເນົາໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ**

ເພື່ອຈຸດປະສົງນຳໃຊ້ເປັນຫຼັກຖານໃນ ການດຳເນີນຄະດີຢູ່ສານ, ການຈົດທະບຽນເຄື່ອງໝາຍການຄ້າຢູ່ຕ່າງປະເທດ ແລະ ໃຊ້ແທນໃບຢັ້ງຢືນ ການຈົດທະບຽນ ຫຼື ການຕໍ່ອາຍຸ ທີ່ເສຍຫາຍ ຫຼື ເສຍ ເຈົ້າຂອງເຄື່ອງໝາຍການຄ້າທີ່ໄດ້ຮັບການຈົດທະບຽນ ສາມາດຍື່ນຄຳຮ້ອງຢູ່ນຳກົມຊັບສິນທາງປັນຍາ ເພື່ອຂໍສຳເນົາໃບຢັ້ງຢືນການຈົດທະບຽນດັ່ງກ່າວ ຕາມແບບພິມຂອງກົມ ພ້ອມທັງຈ່າຍຄ່າບໍລິການ.

**ມາດຕາ 31. ການດັດແກ້ພາຍຫຼັງການຈົດທະບຽນ**

ພາຍຫຼັງທີ່ໄດ້ຮັບການຈົດທະບຽນແລ້ວ ເຈົ້າຂອງເຄື່ອງໝາຍການຄ້າສາມາດຍື່ນຄຳຮ້ອງຂໍດັດແກ້ຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ ເພື່ອຂໍດັດແກ້ບາງລາຍການ ສິນຄ້າ ຫຼື ການບໍລິການ ທີ່ໄດ້ຈົດທະບຽນ, ສະຫຼະສິດຕໍ່ບາງອົງປະກອບຂອງເຄື່ອງໝາຍການຄ້າ, ດັດແກ້ບາງຂໍ້ຜິດພາດໃນການຮ້ອງຂໍຈົດທະບຽນ ຫຼື ສະໜອງຕົວຢ່າງຂອງເຄື່ອງໝາຍການຄ້າ. ແຕ່ການດັດແກ້ເຄື່ອງໝາຍການຄ້ານັ້ນຕ້ອງບໍ່ປ່ຽນແປງລັກສະນະຕົ້ນຕໍຂອງເຄື່ອງໝາຍດັ່ງກ່າວ.

**ມາດຕາ 32. ການຍົກເລີກ ການຈົດທະບຽນເຄື່ອງໝາຍການຄ້າ**

ບຸກຄົນທີສາມ ມີສິດຍື່ນຄຳຮ້ອງຂໍຍົກເລີກ ການຈົດທະບຽນເຄື່ອງໝາຍການຄ້າ ພາຍໃນໄລຍະເວລາ 5 ປີ ນັບແຕ່ວັນເຜີຍແຜ່ ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບຊັບສິນອຸດສາຫະກຳ ເປັນຕົ້ນໄປ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 44 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ການຍື່ນຄຳຮ້ອງຂໍຍົກເລີກ ການຈົດທະບຽນເຄື່ອງໝາຍການຄ້າ ໃຫ້ປະຕິບັດຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ໃນກໍລະນີ ເຈົ້າຂອງເຄື່ອງໝາຍການຄ້າທີ່ໄດ້ຈົດທະບຽນແລ້ວ ຫາກບໍ່ປະຕິບັດຕາມບົດບັນຍັດຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 65 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ, ກົມຊັບສິນທາງປັນຍາມີສິດ ຍົກເລີກ ການຈົດທະບຽນເຄື່ອງໝາຍການຄ້າດັ່ງກ່າວ.

ບຸກຄົນທີ່ສາມສາມາດຍື່ນຄຳສະເໜີຂໍໃຫ້ກົມຊັບສິນທາງປັນຍາ ຍົກເລີກການຈົດທະບຽນເຄື່ອງໝາຍການຄ້າ ຕາມແບບພິມຂອງກົມ ພ້ອມທັງຈ່າຍຄ່າບໍລິການ ໃນກໍລະນີທີ່ເຫັນວ່າເຄື່ອງໝາຍການຄ້າ ທີ່ໄດ້ຈົດທະບຽນແລ້ວນັ້ນຫາກບໍ່ຖືກນຳໃຊ້ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 65 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ພາຍຫຼັງກົມໄດ້ຮັບຄຳສະເໜີດັ່ງກ່າວນັ້ນແລ້ວ ຕ້ອງແຈ້ງໃຫ້ເຈົ້າຂອງເຄື່ອງໝາຍການຄ້າຊາບ. ເຈົ້າຂອງເຄື່ອງໝາຍການຄ້າສາມາດຍື່ນຄຳຊີ້ແຈງເຖິງກົມພາຍໃນເວລາ 60 ວັນ ນັບແຕ່ວັນທີອອກແຈ້ງການເປັນຕົ້ນໄປ. ໃນກໍລະນີ ເຈົ້າຂອງເຄື່ອງໝາຍການຄ້າຫາກບໍ່ມີຄຳຊີ້ແຈງໃດໆ ໃຫ້ຖືວ່າເຈົ້າຂອງເຄື່ອງໝາຍການຄ້ານັ້ນຍິນຍອມຕໍ່ການ ຍົກເລີກ ການຈົດທະບຽນເຄື່ອງໝາຍການຄ້າຂອງຕົນ. ກົມຕ້ອງອອກໜັງສື ຍົກເລີກ ເຄື່ອງໝາຍການຄ້າດັ່ງກ່າວ ແລະ ແຈ້ງໃຫ້ເຈົ້າຂອງເຄື່ອງໝາຍຊາບ.

ໃນກໍລະນີ ທີ່ບຸກຄົນທີສາມຫາກມີການຮ້ອງຟ້ອງຕໍ່ສານປະຊາຊົນ ແລະ ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ມີການ ຍົກເລີກ ການຈົດທະບຽນເຄື່ອງໝາຍການຄ້າດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 139 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ, ກົມຊັບສິນທາງປັນຍາຕ້ອງ ຍົກເລີກ ການຈົດທະບຽນເຄື່ອງໝາຍການຄ້າດັ່ງກ່າວ. ການຮ້ອງຟ້ອງດັ່ງກ່າວ ສາມາດຍື່ນເວລາໃດກໍໄດ້ຕະຫຼອດໄລຍະອາຍຸການປົກປ້ອງເຄື່ອງໝາຍການຄ້າ.

ພາຍຫຼັງສິ້ນສຸດການພິຈາລະນາຂອງກົມ ຫຼື ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານປະຊາຊົນກ່ຽວກັບ ການຍົກເລີກແລ້ວ ກົມຊັບສິນທາງປັນຍາ ຕ້ອງແຈ້ງຜົນດັ່ງກ່າວ ໃຫ້ເຈົ້າຂອງເຄື່ອງໝາຍການຄ້າ ແລະ ບຸກຄົນທີ່ສາມທີ່ຮ້ອງຂໍ ຍົກເລີກຊາບ. ກົມຊັບສິນທາງປັນຍາຕ້ອງບັນທຶກ ການຍົກເລີກ ລົງໃນຖານຂໍ້ມູນ, ປຶ້ມບັນທຶກການຈົດທະບຽນ ແລະ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບຊັບສິນອຸດສາຫະກຳ.

**ມາດຕາ 33. ອາຍຸການປົກປ້ອງ**

ອາຍຸການປົກປ້ອງເຄື່ອງໝາຍການຄ້າມີກຳນົດ 10 ປີ ນັບແຕ່ວັນຍື່ນຄຳຮ້ອງເປັນຕົ້ນໄປ.

ສຳລັບເຄື່ອງໝາຍການຄ້າ ທີ່ໄດ້ຈົດທະບຽນ ຫຼື ຍື່ນຄຳຮ້ອງຂໍຈົດທະບຽນ ກ່ອນທີ່ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 38/ສພຊ, ລົງວັນທີ 15 ພາຈິກ 2017 ມີຜົນບັງຄັບໃຊ້. ອາຍຸການປົກປ້ອງແມ່ນໃຫ້ນັບແຕ່ວັນຈົດທະບຽນເປັນຕົ້ນໄປ.

**ມາດຕາ 34. ການຕໍ່ອາຍຸການປົກປ້ອງ**

ເຄື່ອງໝາຍການຄ້າທີ່ໄດ້ຈົດທະບຽນແລ້ວ ເມື່ອໝົດອາຍຸການປົກປ້ອງ ສາມາດຕໍ່ອາຍຸໄດ້ອີກເທື່ອລະ 10 ປີ ໂດຍຍື່ນຄຳຮ້ອງຂໍຕໍ່ອາຍຸການປົກປ້ອງຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ຊຶ່ງການຍື່ນຄຳຮ້ອງຂໍຕໍ່ອາຍຸດັ່ງກ່າວຕ້ອງຍື່ນພາຍໃນ 6 ເດືອນ ກ່ອນວັນສິ້ນສຸດອາຍຸການປົກປ້ອງ.

ໃນກໍລະນີ ອາຍຸການປົກປ້ອງ ເຄື່ອງໝາຍການຄ້າຫາກໝົດອາຍຸແລ້ວ ແຕ່ຍັງບໍ່ທັນໄດ້ຍື່ນຄຳຮ້ອງຂໍຕໍ່ອາຍຸ ຜູ້ຮ້ອງຂໍສາມາດຍື່ນຄຳຮ້ອງຂໍຕໍ່ອາຍຸການຈົດທະບຽນໄດ້ ແຕ່ຕ້ອງຍື່ນພາຍໃນ 6 ເດືອນ ນັບແຕ່ວັນທີສິ້ນສຸດອາຍຸການປົກປ້ອງດັ່ງກ່າວ ແຕ່ຕ້ອງຈ່າຍຄ່າບໍລິການໃນການຫຼ້າຊ້າຂອງການຕໍ່ອາຍຸ.

ໃນກໍລະນີ ທີ່ມື້ສຸດທ້າຍຂອງໄລຍະເວລາຂອງອາຍຸການປົກປ້ອງເຄື່ອງໝາຍການຄ້າ ຫາກແມ່ນວັນພັກທາງລັດຖະການ ຫຼື ເປັນວັນທີ່ກົມບໍ່ ເປີດຮັບຄໍາຮ້ອງ, ກົມຕ້ອງຕໍ່ໄລຍະເວລາດັ່ງກ່າວອອກໄປຈົນເຖິງ ວັນທໍາອິດຂອງວັນລັດຖະການ ຖັດໄປ.

## ໝວດທີ 6
## ການໂອນສິດ ແລະ ການອະນຸຍາດນໍາໃຊ້ເຄື່ອງໝາຍການຄ້າ

### ມາດຕາ 35. ການໂອນສິດ ແລະ ການບັນທຶກຂໍ້ມູນການໂອນສິດ

ເຈົ້າຂອງເຄື່ອງໝາຍການຄ້າ ຫຼື ເຄື່ອງໝາຍຮັບຮອງ ຫຼື ເຄື່ອງໝາຍລວມໝູ່ ສາມາດໂອນສິດຂອງຕົນ ບາງສ່ວນ ຫຼື ທັງໝົດ ດ້ວຍການເຮັດສັນຍາ, ການສືບທອດມູນມໍລະດົກ ຫຼື ການໃຫ້ເປັນຂອງຂວັນ.

ໃນກໍລະນີ ມີການໂອນສິດເຄື່ອງໝາຍການຄ້າ ຫຼື ເຄື່ອງໝາຍຮັບຮອງ ຫຼື ເຄື່ອງໝາຍລວມໝູ່ ທີ່ໄດ້ຮັບການຈົດທະບຽນ, ຜູ້ໂອນສິດ ຫຼື ຜູ້ຮັບໂອນສິດ ຕ້ອງແຈ້ງກ່ຽວກັບການໂອນສິດດັ່ງກ່າວໃຫ້ກົມຊັບສິນທາງປັນຍາຊາບຕາມແບບພິມຂອງກົມ ພ້ອມທັງຈ່າຍຄ່າບໍລິການ. ກົມຕ້ອງບັນທຶກການໂອນສິດດັ່ງກ່າວເຂົ້າໃນ ຖານຂໍ້ມູນ, ປຶ້ມບັນທຶກການຈົດທະບຽນ, ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບຊັບສິນອຸດສາຫະກໍາ ແລະ ອອກໃບຢັ້ງຢືນການໂອນສິດດັ່ງກ່າວໃຫ້ແກ່ຜູ້ຮັບໂອນສິດ. ຖ້າຜູ້ທີ່ໄດ້ຮັບໂອນສິດຫາກເປັນຜູ້ແຈ້ງການໂອນສິດ, ຜູ້ກ່ຽວຕ້ອງ ສົ່ງສໍາເນົາເອກະສານດັ່ງກ່າວ ໃຫ້ຜູ້ໂອນສິດ.

ໃນກໍລະນີ ທີ່ມີການໂອນກໍາມະສິດຂອງນິຕິບຸກຄົນ ທີ່ກ່ຽວຂ້ອງກັບ ເຄື່ອງໝາຍການຄ້າ ຫຼື ເຄື່ອງໝາຍຮັບຮອງ ຫຼື ເຄື່ອງໝາຍລວມໝູ່ ຕ້ອງປະຕິບັດຕາມການກໍານົດໄວ້ໃນເອກະສານ ຂອງການໂອນສິດດັ່ງກ່າວ. ໃນກໍລະນີ ທີ່ບໍ່ໄດ້ກໍານົດໄວ້ເປັນຢ່າງອື່ນ, ການໂອນກໍາມະສິດຂອງນິຕິບຸກຄົນໃຫ້ຖືວ່າລວມເອົາການໂອນເຄື່ອງໝາຍການຄ້າຂອງນິຕິບຸກຄົນດັ່ງກ່າວນັ້ນ.

ໃນກໍລະນີທີ່ ຕ້ອງການຄວາມກະຈ່າງແຈ້ງ ຫຼື ມີຄວາມສົງໃສ ກົມຊັບສິນທາງປັນຍາ ສາມາດຂໍໃຫ້ບຸກຄົນທີ່ແຈ້ງການໂອນສິດ ຍື່ນຂໍ້ມູນ ຫຼື ເອກະສານ ເພີ່ມເຕີມ.

ການໂອນສິດ ຈະບໍ່ມີຜົນສັກສິດຕໍ່ຄູ່ກໍລະນີ ຈົນກວ່າຈະມີການບັນທຶກການໂອນສິດ, ເວັ້ນເສຍແຕ່ພວກກ່ຽວ ມີໜັງສືກ່ຽວກັບການໂອນສິດດັ່ງກ່າວມາກ່ອນແລ້ວ.

### ມາດຕາ 36. ການອະນຸຍາດນໍາໃຊ້

ເຈົ້າຂອງສິດຕໍ່ເຄື່ອງໝາຍການຄ້າສາມາດອະນຸຍາດໃຫ້ບຸກຄົນອື່ນນໍາໃຊ້ເຄື່ອງໝາຍການຄ້າຂອງຕົນ ເພື່ອສະແຫວງຫາຜົນປະໂຫຍດຈາກສິດດັ່ງກ່າວ ບາງສ່ວນ ຫຼື ທັງໝົດ ຊຶ່ງສາມາດດໍາເນີນໂດຍການເຮັດສັນຍາການອະນຸຍາດນໍາໃຊ້ ແຕ່ບໍ່ຖືເປັນການໂອນກໍາມະສິດເຄື່ອງໝາຍການຄ້າຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 47 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ. ຜູ້ອະນຸຍາດນໍາໃຊ້ ຫຼື ຜູ້ໄດ້ຮັບອະນຸຍາດນໍາໃຊ້ຕ້ອງແຈ້ງໃຫ້ກົມຊັບສິນທາງປັນຍາຊາບ ຕາມຂັ້ນຕອນດັ່ງທີ່ໄດ້ກໍານົດໄວ້ໃນ ມາດຕາ 40 ຂອງຂໍ້ຕົກລົງສະບັບນີ້.

ໃນກໍລະນີ ທີ່ມີການໂອນກໍາມະສິດຂອງນິຕິບຸກຄົນ, ການອະນຸຍາດນໍາໃຊ້ ເຄື່ອງໝາຍການຄ້າ ຫຼື ເຄື່ອງໝາຍຮັບຮອງ ຫຼື ເຄື່ອງໝາຍລວມໝູ່ ໃຫ້ຖືວ່າ ການອະນຸຍາດນໍາໃຊ້ດັ່ງກ່າວ ໄດ້ຖືກໂອນພ້ອມກັບການໂອນກໍາມະສິດຂອງນິຕິບຸກຄົນນັ້ນ ເວັ້ນເສຍແຕ່ໄດ້ກໍານົດໄວ້ເປັນຢ່າງອື່ນຢູ່ໃນສັນຍາການອະນຸຍາດນໍາໃຊ້ ຫຼື ໃນເອກະສານການໂອນກໍາມະສິດດັ່ງກ່າວ.

ໃນກໍລະນີ ທີ່ມີການໂອນກໍາມະສິດຂອງນິຕິບຸກຄົນ ສັນຍາການອະນຸຍາດນໍາໃຊ້ເຄື່ອງໝາຍການຄ້າໃຫ້ແກ່ບຸກຄົນອື່ນ ຈະບໍ່ຖືວ່າເປັນໂມຄະ, ເວັ້ນເສຍແຕ່ໄດ້ກໍານົດໄວ້ເປັນຢ່າງອື່ນໃນສັນຍາການອະນຸຍາດນໍາໃຊ້.

## ໝວດທີ 7
## ການເປັນຜູ້ຕາງໜ້າໃນການຈົດທະບຽນເຄື່ອງໝາຍການຄ້າ ແລະ ດໍາເນີນການອື່ນໆ

### ມາດຕາ 37. ບຸກຄົນທີ່ມີສິດເປັນຜູ້ຕາງໜ້າໃນການຈົດທະບຽນເຄື່ອງໝາຍການຄ້າ ແລະ ດໍາເນີນການອື່ນໆ

ບຸກຄົນທີ່ມີສິດຕາງໜ້າໃຫ້ແກ່ຜູ້ທີ່ມີສິດໄດ້ຮັບການປົກປ້ອງຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ເພື່ອດໍາເນີນການຈົດທະບຽນ ແລະ ດໍາເນີນການອື່ນໆ ມີດັ່ງນີ້:

1. ໃນກໍລະນີ ຄໍາຮ້ອງດຽວທີ່ມີຜູ້ຍື່ນຮ່ວມກັນຫຼາຍຄົນ, ຕ້ອງແຕ່ງຕັ້ງບຸກຄົນໃດໜຶ່ງໃນນັ້ນເປັນຜູ້ຕາງໜ້າໃຫ້ພວກກ່ຽວ; ຫຼື
2. ທະນາຍຄວາມທີ່ໄດ້ຮັບອະນຸຍາດໃຫ້ດໍາເນີນການ ທາງດ້ານກົດໝາຍໃນ ສປປ ລາວ; ຫຼື
3. ຜູ້ປະກອບການທາງດ້ານຊັບສິນທາງປັນຍາ; ຫຼື
4. ຜູ້ຕາງໜ້າ ຫຼື ພະນັກງານ ຂອງ ນິຕິບຸກຄົນ ຫຼື ການຈັດຕັ້ງ; ຫຼື
5. ບຸກຄົນທົ່ວໄປທີ່ຜູ້ຮ້ອງຂໍວ່າຈ້າງ.

ສໍາລັບ ຜູ້ຮ້ອງຂໍຈົດທະບຽນທີ່ເປັນຄົນຕ່າງປະເທດ ຕ້ອງຍື່ນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າຜ່ານຜູ້ປະກອບການທາງດ້ານຊັບສິນທາງປັນຍາ ຫຼື ທະນາຍຄວາມທີ່ໄດ້ຮັບອະນຸຍາດໃຫ້ດໍາເນີນການ ທາງດ້ານກົດໝາຍໃນ ສປປ ລາວ ເທົ່ານັ້ນ.

### ມາດຕາ 38. ເງື່ອນໄຂການເປັນ ຜູ້ປະກອບການທາງດ້ານຊັບສິນທາງປັນຍາ ແລະ ທະນາຍຄວາມ ໃນການຈົດທະບຽນເຄື່ອງໝາຍການຄ້າ ແລະ ດໍາເນີນການອື່ນໆທີ່ກ່ຽວຂ້ອງ

ບຸກຄົນທີ່ມີສິດເປັນຜູ້ປະກອບການທາງດ້ານຊັບສິນທາງປັນຍາ ຫຼື ທະນາຍຄວາມ ຕ້ອງ ມີຄວາມຮູ້ດ້ານຊັບສິນທາງປັນຍາ, ມີຄຸນວຸດທິການສຶກສາ ແລະ ມີທີ່ຢູ່ ໃນ ສປປ ລາວ ແລະ ຕ້ອງໄດ້ຮັບອະນຸຍາດ ຫຼື ຮັບຮອງ ຈາກກົມຊັບສິນທາງປັນຍາ.ສໍາລັບເງື່ອນໄຂລະອຽດ ແມ່ນກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 39. ການແຕ່ງຕັ້ງຜູ້ຕາງໜ້າ**

ຜູ້ຕາງໜ້າຕ້ອງແມ່ນບຸກຄົນທີ່ໄດ້ຮັບການແຕ່ງຕັ້ງຕາມໃບມອບສິດທີ່ມີລາຍເຊັນຂອງຜູ້ຮ້ອງຂໍ ຫຼື ຜູ້ມອບສິດ.

ໃນກໍລະນີ ຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າຫາກຍື່ນຮ່ວມກັນຫຼາຍຄົນ, ໃບມອບສິດຕ້ອງມີລາຍເຊັນຂອງໝົດທຸກຄົນ, ເວັ້ນເສຍແຕ່ມີບຸກຄົນໃດໜຶ່ງ ຫາກເສຍຊີວິດ.

ອີງຕາມ ມາດຕາ 41 ຂອງຂໍ້ຕົກລົງສະບັບນີ້ ແລະ ການກໍານົດອື່ນໃນໝວດນີ້, ໃບມອບສິດໜຶ່ງສາມາດແຕ່ງຕັ້ງຜູ້ຕາງໜ້າໄດ້ຫຼາຍກວ່າໜຶ່ງຄົນ ຊຶ່ງມີທີ່ຢູ່ບ່ອນດຽວກັນ.

**ມາດຕາ 40. ການມອບສິດ**

ການມອບສິດ ໝາຍເຖິງ ໃບມອບສິດທີ່ເຈົ້າຂອງສິດໄດ້ມອບໝາຍໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນປະຕິບັດໜ້າທີ່ແທນຕົນ.

ໃບມອບສິດ ຕ້ອງກໍານົດ:

- ລັກສະນະສະເພາະ ແລະ ຂອບເຂດຂອງການເປັນຜູ້ຕາງໜ້າ;
- ສິດທີ່ຖືກມອບໝາຍ ໃຫ້ດໍາເນີນການໃດໜຶ່ງທີ່ກ່ຽວຂ້ອງນໍາກົມຊັບສິນທາງປັນຍາ;
- ໄລຍະເວລາ ຖ້າມີ;
- ການຍົກເລີກໂດຍຜູ້ມອບສິດໄດ້ທຸກເວລາ ໂດຍບໍ່ສົ່ງຜົນກະທົບຕໍ່ສິດຂອງຜູ້ຕາງໜ້າໃນການໄດ້ຮັບຄ່າຕອບແທນຈາກການບໍລິການ ແລະ ຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນໃນລະຫວ່າງການຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຈະຮັບຮູ້ເງື່ອນໄຂທີ່ໄດ້ກໍານົດໄວ້ໃນໃບມອບສິດ, ເວັ້ນເສຍແຕ່ເງື່ອນໄຂຂອງໃບມອບສິດຫາກຂັດກັບ ກົດໝາຍ ຫຼື ລະບຽບການ ທີ່ກ່ຽວຂ້ອງ.

ໃນກໍລະນີ ທີ່ໃບມອບສິດຫາກບໍ່ໄດ້ກໍານົດ ຂອບເຂດ ຫຼື ໄລຍະເວລາ ຂອງການເປັນຜູ້ຕາງໜ້າ, ກົມຊັບສິນທາງປັນຍາຈະຖືວ່າໃບມອບສິດດັ່ງກ່າວນໍາໃຊ້ສະເພາະ ຄໍາຮ້ອງດຽວເທົ່ານັ້ນ ຫຼື ການດໍາເນີນການອື່ນທີ່ກ່ຽວຂ້ອງກັບໃບມອບສິດດັ່ງກ່າວ ແລະ ຈະຖືວ່າອາຍຸຂອງໃບມອບສິດ ສິ້ນສຸດລົງ ໃນເມື່ອທຸກບັນຫາທີ່ກ່ຽວຂ້ອງກັບຄໍາຮ້ອງດັ່ງກ່າວ ຫຼື ການດໍາເນີນການອື່ນຫາກສໍາເລັດແລ້ວ.

**ມາດຕາ 41. ການມອບສິດທີ່ມີຜົນບັງຄັບໃຊ້**

ການມອບສິດທີ່ມີຜົນບັງຄັບໃຊ້ ຕ້ອງເຮັດເປັນລາຍລັກອັກສອນ ແລະ ມີລາຍເຊັນຂອງຜູ້ມອບສິດ. ໃນກໍລະນີ ເຄື່ອງໝາຍການຄ້າ ຫາກມີເຈົ້າຂອງຮ່ວມກັນຫຼາຍຄົນ ໃບມອບສິດຕ້ອງມີລາຍເຊັນຂອງເຈົ້າຂອງຮ່ວມທຸກຄົນ.

ໃນກໍລະນີ ທີ່ຜູ້ອອກໃບມອບສິດຫາກເປັນນິຕິບຸກຄົນ ຫຼື ການຈັດຕັ້ງ ໃບມອບສິດຕ້ອງມີລາຍເຊັນຂອງຜູ້ມີສິດອໍານາດຂອງນິຕິບຸກຄົນ ຫຼື ການຈັດຕັ້ງ ດັ່ງກ່າວ.

ໃນກໍລະນີ ເຈົ້າຂອງເຄື່ອງໝາຍຮ່ວມ ບຸກຄົນໃດ ໜຶ່ງຫາກປະຕິເສດບໍ່ລົງລາຍເຊັນໃນໃບມອບສິດ ຈະຖືວ່າໃບມອບສິດດັ່ງກ່າວ ບໍ່ມີຜົນບັງຄັບໃຊ້.

**ມາດຕາ 42. ການສິ້ນສຸດການເປັນຜູ້ຕາງໜ້າ**

ການເປັນຜູ້ຕາງໜ້າຈະສິ້ນສຸດລົງ ໃນກໍລະນີທີ່ການມອບສິດຫາກຖືກຍົກເລີກໂດຍຜູ້ມອບສິດ ຫຼື ຜູ້ຕາງໜ້າຫາກ ຖອນຕົວ.

ໃນກໍລະນີ ຜູ້ຕາງໜ້າຫາກຖອນຕົວ ຕ້ອງແຈ້ງໃຫ້ຜູ້ມອບສິດ ແລະ ກົມຊັບສິນທາງປັນຍາຊາບ.

## ໝວດທີ 8

## ການທົບທວນຄືນທາງດ້ານບໍລິຫານ ກ່ຽວກັບ ການຈົດທະບຽນເຄື່ອງໝາຍການຄ້າ

**ມາດຕາ 43. ການທົບທວນຄືນ ແລະ ການແກ້ໄຂ ຂໍ້ຜິດພາດ**

ກົມຊັບສິນທາງປັນຍາ ມີສິດ ທົບທວນຄືນການຈົດທະບຽນເຄື່ອງໝາຍການຄ້າ ເພື່ອດຳເນີນການທາງດ້ານບໍລິຫານຕາມຄວາມຈຳເປັນ ເພື່ອປ້ອງກັນ ແລະ ແກ້ໄຂ ຂໍ້ຜິດພາດ.

**ມາດຕາ 44. ການທົບທວນຄືນດ້ານບໍລິຫານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຫັນວ່າກົມໄດ້ດຳເນີນການ ກ່ຽວກັບ ການຈົດທະບຽນເຄື່ອງໝາຍການຄ້າຂອງຕົນ ມີຂໍ້ຜິດພາດ ຫຼື ບໍ່ປະຕິບັດຕາມເງື່ອນໄຂດັ່ງທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ ແມ່ນສາມາດສະເໜີຂໍໃຫ້ກົມທົບທວນຄືນ ພາຍໃນເວລາ 90 ວັນ ພາຍຫຼັງ ມື້ອອກແຈ້ງການ ຫຼື ຂໍ້ຕົກລົງ ເປັນຕົ້ນໄປ ໂດຍປະຕິບັດຕາມຂັ້ນຕອນໃດໜຶ່ງ ດັ່ງນີ້:

1) ໃນກໍລະນີ ເປັນຂໍ້ຜິດພາດຂອງກົມ ຜູ້ຮ້ອງຂໍຕ້ອງຍື່ນໃບສະເໜີຂໍດັດແກ້ ພ້ອມດ້ວຍເອກະສານທີ່ມີ ຂໍ້ຜິດພາດດັ່ງກ່າວ ໂດຍບໍ່ຈ່າຍຄ່າທຳນຽມ ຫຼື ຄ່າບໍລິການ; ຫຼື
2) ໃນກໍລະນີ ຂໍ້ຜິດພາດທີ່ເກີດຈາກຜູ້ຮ້ອງຂໍ ຕ້ອງຍື່ນໃບສະເໜີຂໍດັດແກ້ ພ້ອມດ້ວຍເອກະສານທີ່ມີ ຂໍ້ຜິດພາດນັ້ນ ໂດຍຈ່າຍຄ່າບໍລິການ; ຫຼື
3) ໃນກໍລະນີ ທີ່ບໍ່ປະຕິບັດຕາມເງື່ອນໄຂດັ່ງທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ ຜູ້ຮ້ອງຂໍຕ້ອງຍື່ນໃບສະເໜີຂໍໃຫ້ພິຈາລະນາຄືນໃໝ່ ເປັນລາຍລັກອັກສອນ ຊຶ່ງຂໍ້ສະເໜີດັ່ງກ່າວ ຕ້ອງລະບຸຫົວຂໍ້ທີ່ສະເໜີໃຫ້ພິຈາລະນາ ແລະ ປະກອບມີຂໍ້ມູນ ດັ່ງນີ້:
   - ເງື່ອນໄຂ ຫຼື ການຕົກລົງ ທີ່ຕ້ອງການໃຫ້ທົບທວນຄືນ;
   - ຂໍ້ເທັດຈິງ ແລະ ພື້ນຖານທາງດ້ານກົດໝາຍ;
   - ມາດຕະການທີ່ສະເໜີໂດຍຜູ້ຮ້ອງຂໍ ເພື່ອໃຫ້ກົມພິຈາລະນາ.

ການສະເໜີ ຍັງອາດຈະລວມເອົາ ຄຳຊີ້ແຈງ ຫຼື ການອະທິບາຍ ຊຶ່ງຜູ້ສະເໜີເຫັນວ່າ ຈະເປັນການສະໜັບສະໜູນ ໃຫ້ແກ່ ການພິຈາລະນາຄືນໃໝ່ ຫຼື ການຂໍອຸທອນ ໂດຍບໍ່ຈ່າຍຄ່າທຳນຽມ ຫຼື ຄ່າບໍລິການ.

**ມາດຕາ 45. ການສະເໜີໃຫ້ຢຸດຊົ່ວຄາວ**

ການສະເໜີໃຫ້ທົບທວນຄືນທາງດ້ານບໍລິຫານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 44 ຂອງຂໍ້ຕົກລົງສະບັບນີ້ ອາດລວມເອົາ ການສະເໜີໃຫ້ຢຸດຊົ່ວຄາວການປະຕິບັດ ເງື່ອນໄຂ ຫຼື ການຕົກລົງ ຂອງ

ກົມຊັບສິນທາງປັນຍາ ທີ່ຜູ້ສະເໜີຮ້ອງຂໍໃຫ້ມີ ການພິຈາລະນາຄືນໃໝ່ ຫຼື ການຂໍອຸທອນ. ຖ້າບໍ່ດັ່ງນັ້ນ, ເງື່ອນໄຂ ຫຼື ການຕົກລົງດັ່ງກ່າວ ກໍຍັງມີຜົນສັກສິດຢູ່ຈົນກວ່າກົມຈະຍົກເລີກ ເງື່ອນໄຂ ຫຼື ການຕົກລົງດັ່ງກ່າວ. ການຢຸດຊົ່ວຄາວ ຕ້ອງໄດ້ຮັບອະນຸຍາດໃນທຸກກໍລະນີເພື່ອຄວາມຍຸຕິທຳ ໂດຍຄຳນຶງເຖິງຜົນປະໂຫຍດຂອງບຸກຄົນທີສາມ.

**ມາດຕາ 46. ການພິຈາລະນາຄືນໃໝ່**

ໃນກໍລະນີ ມີການສະເໜີໃຫ້ພິຈາລະນາຄືນໃໝ່ ກ່ຽວກັບການຈົດທະບຽນເຄື່ອງໝາຍການຄ້າ ຜູ້ສະເໜີຕ້ອງມີເຫດຜົນທີ່ພຽງພໍ ໃນການສະເໜີໃຫ້ກົມທົບທວນ ເງື່ອນໄຂ ຫຼື ການຕົກລົງ ທີ່ຜູ້ສະເໜີເຫັນວ່າ ບໍ່ສອດຄ່ອງຕາມລະບຽບການ ກ່ຽວກັບການຈົດທະບຽນເຄື່ອງໝາຍການຄ້າ ກົມຊັບສິນທາງປັນຍາຕ້ອງຮັບເອົາການສະເໜີດັ່ງກ່າວ ມາພິຈາລະນາຄືນໃໝ່. ສຳລັບຂັ້ນຕອນການພິຈາລະນາຄືນໃໝ່ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ໃນກໍລະນີ ຜູ້ສະເໜີຫາກບໍ່ພໍໃຈຕໍ່ຜົນການພິຈາລະນາຄືນໃໝ່ ແມ່ນສາມາດຂໍອຸທອນໄປຍັງຄະນະກຳມະການອຸທອນຂອງກົມ ພາຍໃນ 30 ວັນ ນັບແຕ່ມື້ອອກແຈ້ງການກ່ຽວກັບຜົນການພິຈາລະນາດັ່ງກ່າວ ເປັນຕົ້ນໄປ.

ໃນກໍລະນີ ຜູ້ສະເໜີຫາກບໍ່ພໍໃຈກັບການຕົກລົງຂອງກົມ ສາມາດຂໍອຸທອນໄປຍັງສານ.

**ມາດຕາ 47. ການຂໍອຸທອນ**

ການຂໍອຸທອນ ແລະ ການດຳເນີນການ ທີ່ໄດ້ກຳນົດໄວ້ໃນມາດຕານີ້ ຕ້ອງປະຕິບັດຕາມຂັ້ນຕອນທີ່ໄດ້ກຳນົດໄວ້ຢູ່ໃນຂໍ້ຕົກລົງສະບັບນີ້, ຊຶ່ງຂັ້ນຕອນດັ່ງກ່າວ ແມ່ນຂັ້ນຕອນທາງດ້ານບໍລິຫານຂອງກົມຊັບສິນທາງປັນຍາ.

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ດຳເນີນການນຳກົມຊັບສິນທາງປັນຍາ ກ່ຽວກັບ ການຈົດທະບຽນເຄື່ອງໝາຍການຄ້າ ຫາກບໍ່ເຫັນດີ ນຳການກຳນົດເງື່ອນໄຂ ຫຼື ການຕົກລົງ ຂອງກົມ ຜູ້ສະເໜີມີສິດຂໍອຸທອນ ຫຼື ສະເໜີຄຳຄັດຄ້ານ ໄປຍັງຄະນະກຳມະການອຸທອນຂອງກົມ ເພື່ອພິຈາລະນາ ໂດຍເສຍຄ່າທຳນຽມ ແລະ ຄ່າບໍລິການ.

ໃນຂັ້ນຕອນຂອງການດຳເນີນການຂໍອຸທອນ ພະນັກງານຂອງກົມຊັບສິນທາງປັນຍາທີ່ມີສ່ວນຮ່ວມ ໃນການອະນຸຍາດ, ການຢັ້ງຢືນ, ການປະຕິເສດ ຫຼື ການກຳນົດເງື່ອນໄຂ ຫຼື ການຕົກລົງ ຂອງຕົນທີ່ຖືກຂໍອຸທອນ ຕ້ອງໃຫ້ຄຳຊີ້ແຈງເຊັ່ນດຽວກັນ ກ່ຽວກັບ ພື້ນຖານທາງດ້ານກົດໝາຍ ແລະ ຂໍ້ເທັດຈິງ ໃນການຕົກລົງດັ່ງກ່າວ ເພື່ອເປັນຂໍ້ມູນໃຫ້ຄະນະກຳມະການອຸທອນພິຈາລະນາ. ຜູ້ຂໍອຸທອນ ມີໂອກາດຄັ້ງດຽວ ໃນການຊີ້ແຈງ ໂດຍອີງຕາມເງື່ອນໄຂ ດັ່ງທີ່ໄດ້ກຳນົດໄວ້ໃນ ວັກ 2, ມາດຕາ 44 ຂອງຂໍ້ຕົກລົງສະບັບນີ້.

ຄະນະກຳມະການອຸທອນ ອາດຈະເຊີນຜູ້ຊ່ຽວຊານສະເພາະດ້ານເພື່ອໃຫ້ຄຳປຶກສາ. ຄະນະກຳມະການອຸທອນ ຕ້ອງພິຈາລະນາການຂໍອຸທອນ ອີງຕາມການຕົກລົງທີ່ໄດ້ດຳເນີນຕາມມາດຕານີ້ ແລະ ຕ້ອງບັນທຶກການຕົກລົງເປັນລາຍລັກອັກສອນ, ຊຶ່ງຕ້ອງໄດ້ບັນທຶກກ່ຽວກັບການຕົກລົງຂອງຄະນະກຳມະການ ແລະ ພື້ນຖານທາງດ້ານກົດໝາຍ ແລະ ຂໍ້ເທັດຈິງທີ່ກ່ຽວຂ້ອງ. ບົດບັນທຶກການຕົກລົງດັ່ງກ່າວຕ້ອງສົ່ງໃຫ້ຜູ້ສະເໜີຂໍອຸທອນຊາບ.

ໃນກໍລະນີ ຜູ້ສະເໜີຂໍອຸທອນ ບໍ່ສາມາດສະໜອງຂໍ້ມູນທີ່ຈຳເປັນ ຕາມທີ່ກຳນົດໄວ້ໃນ ຂໍ້ 3, ວັກ 1, ມາດຕາ 44 ຂອງຂໍ້ຕົກລົງສະບັບນີ້ ການຂໍອຸທອນດັ່ງກ່າວຖືວ່າເປັນໂມຄະ.

ໃນການສະຫຼຸບການຂໍອຸທອນ, ຄະນະກຳມະການອຸທອນ ຕ້ອງສົ່ງສຳນວນຄຳຮ້ອງຂໍອຸທອນ ພ້ອມດ້ວຍບົດບັນທຶກການຕົກລົງຂອງຕົນ ໃຫ້ກົມຊັບສິນທາງປັນຍາ ເພື່ອດຳເນີນການຂັ້ນຕໍ່ໄປ.

ໃນກໍລະນີ ຄູ່ກໍລະນີຫາກ ບໍ່ພໍໃຈຕໍ່ຜົນການພິຈາລະນາຂອງຄະນະກຳມະການອຸທອນຂອງກົມຊັບສິນທາງປັນຍາ ຄູ່ກໍລະນີສາມາດຂໍອຸທອນ ຕໍ່ສານປະຊາຊົນ.

ສຳລັບຂັ້ນຕອນ ການດຳເນີນການຂໍອຸທອນ ກ່ຽວກັບການຄັດຄ້ານຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 48. ຄະນະກຳມະການອຸທອນ**

ກົມຊັບສິນທາງປັນຍາ ຕ້ອງສ້າງຕັ້ງຄະນະກຳມະການອຸທອນຂອງຕົນ ເພື່ອແກ້ໄຂການຂໍອຸທອນທາງດ້ານບໍລິຫານທີ່ກ່ຽວຂ້ອງກັບ ການຢັ້ງຢືນ, ການປະຕິເສດ ຫຼື ການກຳນົດເງື່ອນໄຂ ຫຼື ການຕົກລົງຂອງກົມຊັບສິນທາງປັນຍາ. ຄະນະກຳມະການອຸທອນຕ້ອງເປັນເອກະລາດ ຊຶ່ງສາມາດສ້າງຕັ້ງຂຶ້ນແບບຖາວອນ ຫຼື ຊົ່ວຄາວ.

ບຸກຄົນທີ່ມີສ່ວນຮ່ວມໃນ ການຢັ້ງຢືນ, ການປະຕິເສດ ຫຼື ການກຳນົດເງື່ອນໄຂ ຫຼື ການຕົກລົງທີ່ເປັນສາເຫດຂອງການຂໍອຸທອນ ບໍ່ສາມາດເຂົ້າຮ່ວມຢູ່ໃນຄະນະກຳມະການອຸທອນ.

**ມາດຕາ 49. ການສ້າງ ສຳນວນເອກະສານ ຫຼື ເອກະສານທີ່ຊອກບໍ່ເຫັນ**

ໃນກໍລະນີທີ່ສຳນວນເອກະສານ ຫຼື ເອກະສານອື່ນໆ ທີ່ກ່ຽວຂ້ອງກັບຄຳຮ້ອງ ຫຼື ການດຳເນີນການອື່ນໆ ຫາກ ເສຍຫາຍ ຫຼື ຊອກບໍ່ເຫັນ, ກົມຊັບສິນທາງປັນຍາຕ້ອງສ້າງສຳເນົາສຳນວນເອກະສານ ຫຼື ເອກະສານ ອື່ນໆ ທີ່ເສຍນັ້ນຂຶ້ນໃໝ່. ໃນກໍລະນີດັ່ງກ່າວ, ກົມອາດສະເໜີໃຫ້ ຜູ້ຍື່ນຄຳຮ້ອງ ຫຼື ເຈົ້າຂອງເອກະສານ ສົ່ງສຳເນົາເອກະສານທີ່ກ່ຽວຂ້ອງ ຫຼື ເອກະສານທີ່ໄດ້ຕິດຕໍ່ພົວພັນກັບກົມ ພ້ອມທັງຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງສຳເນົາດັ່ງກ່າວ ລວມທັງ ເອກະສານ ຫຼື ສຳນວນເອກະສານທີ່ກ່ຽວຂ້ອງ ທີ່ໄດ້ຕິດຕໍ່ພົວພັນກັບກົມ ທີ່ບໍ່ມີການບັນທຶກໄວ້ ແຕ່ຜູ້ຮ້ອງຂໍ ຫຼື ເຈົ້າຂອງນັ້ນຮັບຮູ້.

## ໝວດທີ 9
## ອົງການຄຸ້ມຄອງ ວຽກງານເຄື່ອງໝາຍການຄ້າ ແລະ ຊື່ການຄ້າ

**ມາດຕາ 50. ອົງການຄຸ້ມຄອງ**

ກົມຊັບສິນທາງປັນຍາ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຜູ້ຮັບຜິດຊອບ ການພິຈາລະນາຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕາມເງື່ອນໄຂດັ່ງທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ເປັນຜູ້ຮັບຜິດຊອບໃຫ້ການບໍລິການກ່ຽວກັບການຮັບຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕາມການມອບໝາຍຂອງກົມ.

ສຳລັບຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີ ເມືອງ, ເທດສະບານ, ນະຄອນ ແມ່ນປະຕິບັດຕາມການມອບໝາຍຂອງ ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ.

**ມາດຕາ 51. ສິດ ແລະ ໜ້າທີ່ ຂອງກົມຊັບສິນທາງປັນຍາ**

ກົມຊັບສິນທາງປັນຍາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ອອກ ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ກ່ຽວກັບ ເຄື່ອງໝາຍການຄ້າ;
2. ຄົ້ນຄ້ວາ ແລະ ນຳສະເໜີກະຊວງ ເພື່ອອອກ ນິຕິກຳ ແລະ ລະບຽບການຕ່າງໆ ໃນການຄຸ້ມຄອງ ແລະ ປົກປ້ອງເຄື່ອງໝາຍການຄ້າ;
3. ຮັບ ແລະ ພິຈາລະນາສຳນວນຄຳຮ້ອງຂໍຈົດທະບຽນ, ການຕໍ່ອາຍຸ, ການບັນທຶກການປ່ຽນຊື່ ແລະ/ຫຼື ທີ່ຢູ່, ການອະນຸຍາດນຳໃຊ້, ການໂອນສິດ ແລະ ການສະເໜີອື່ນໆ ກ່ຽວກັບເຄື່ອງໝາຍການຄ້າ;
4. ບັນທຶກ ແລະ ເກັບຮັກສາຂໍ້ມູນ ກ່ຽວກັບ ເຄື່ອງໝາຍການຄ້າ;
5. ໃຫ້ບໍລິການຄົ້ນຫາເຄື່ອງໝາຍການຄ້າໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ;
6. ຈົດທະບຽນ, ແຈ້ງປະຕິເສດ, ຍົກເລີກ ຫຼື ລຶບລ້າງ ແລະ ອື່ນໆ ກ່ຽວກັບການຈົດທະບຽນເຄື່ອງໝາຍການຄ້າ;
7. ຄົ້ນຄວ້າ ແລະ ພິຈາລະນາຄຳສະເໜີ ຂໍຄັດຄ້ານຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ;
8. ຄົ້ນຄວ້າ ແລະ ພິຈາລະນາຄຳສະເໜີໃຫ້ທົບທວນຄືນທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນເຄື່ອງໝາຍການຄ້າ;
9. ຄົ້ນຄວ້າ ແລະ ພິຈາລະນາຄຳສະເໜີ ຂໍອຸທອນ ກ່ຽວກັບການຈົດທະບຽນເຄື່ອງໝາຍການຄ້າ;
10. ຊຸກຍູ້ ແລະ ສົ່ງເສີມວຽກງານການຈົດທະບຽນເຄື່ອງໝາຍການຄ້າ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 52. ສິດ ແລະ ໜ້າທີ່ ຂອງພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ**

ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຄຳຮ້ອງ, ກວດຄວາມ ຖືກຕ້ອງ ແລະ ຄົບຖ້ວນ ຂອງສຳນວນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕາມເງື່ອນໄຂຕ່ຳສຸດ;

2. ນຳສົ່ງສຳນວນຄຳຮ້ອງ, ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ກົມຊັບສິນທາງປັນຍາ ເພື່ອດຳເນີນການຕາມຂັ້ນຕອນຕໍ່ໄປ;
3. ມອບໝາຍຄວາມຮັບຜິດຊອບໃຫ້ ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີ ເມືອງ, ເທດສະບານ ແລະ ນະຄອນ ຕາມຄວາມເໝາະສົມ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງກົມຊັບສິນທາງປັນຍາ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 53 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຊັບສິນທາງປັນຍາ ແລະ ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 54. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ກຳນົດ ແລະ ຂໍ້ຕົກລົງໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີ**
**ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ**